
ริชาร์ด สะเมริ่น

กับ

ไอ. เรนจ์



ศิราสัน
ยะมริกัน

๒๑)

โจ. เรพริ

สาระบาย

ຂອງຂວັນຈາກເມຈາຍ.....ໜ້າ ๑

ສອງສຸພາບບຸຣຸດໃນມິ້ເທວສກີວິງ....." ๑๔

ໃບໄມໃບສຸດທາຍ....." ๔๑

ທ້ອງເຊົ້າທີ່ມີເຄື່ອງຄົບ....." ๖๑

ທ້ອໃຈໄຂ່ຕົ້ມກາ....." ๔๔

ຕຳຣວດກວດຄວາມສງົບ....." ๗๑

ຈາກ່ອນນັ້ງຂອງຄົນຂັບຣິ ณ ม้า....." ๗๘

ກາມປະຕິຮູບ - ວິຖີຊີວິດ....." ๘๔

ໄຟສວາດຂອງນັກທຸຣະກິດ....." ๙๗

ຫລັງຈາກ ๔๐ ປີ ....." ๑๐๖

ມຄພ....." ๑๐๙

ເຈົ້າບ່າວແລະເຈົ້າສາວວິວາ....." ๑๑๒

ຄູ່ໃຜ - ເມມັ....." ๑๔๗

ເຈົ้าอำมาด อาสมา และพ่อยโมง....." ๑๖๗

ปะตูะรง....." ๑๔๗

ຂອງຂວັນຈາກເມຈາຍ

ມື້ງດອລລາກັບ ຫຼກ ເຊັ້ນທໍ່ນັ້ນ ນາງໄດ້ແຍກເງິນຈຳນວນນີ້ ໄວ້ອີກບ່ອນນຶ່ງ ເທື່ອລະເຊັ້ນ ສອງເຊັ້ນ ແລະ ອີກເຊັ້ນນຶ່ງນັ້ນ ແຍກ ໄວ້ສຳລັບຊື້ຊຶ້ມ ປາ ອາຫານຢ່າງອື່ນ ນາງແດລລານັບເງິນຈຳນວນນີ້ ເຖິງສາມເທື່ອ ນັບແລ້ວນັບອີກ ກໍຍັງເປັນນຶ່ງດອລລາກັບ ຫຼກ ເຊັ້ນຢູ່ ຄືເກົ່າ ແລະມື້ອື່ນນີ້ກໍຈະເປັນມື້ຂຸນທຣິສມາສແລ້ວ*.

ຈະເຮັດຫຍັງກໍບໍ່ໄດ້ ນອກຈາກໂດດຂຶ້ນຕຽງ ແລ້ວນອນໄຫ້ ຄິດຫຍັງກໍບໍ່ອອກ ແດລລາ ກໍເລີຍໂດດຂຶ້ນຕຽງ ນອນໄຫ້ຢູ່ຜູ້ດຽວ.

*ເມຈາຍ: ຜູ້ທຳອິດທີ່ໃຫ້ຂອງຂວັນໃນວັນທຣິສມາສ

*ທຣິສມາສ: ມື້ເກີດຂອງພະເຍຊູ ຊຶ່ງຊາວທຣິສຈຽນທັ່ງຫລາຍຖື ເປັນມື້ສຳຄັນໃນດ້ານສາສນາແລະເລກປ່ຽນຂອງຂວັນ ຊຶ່ງກັນແລະກັນ.

ໃນຂນະທີ່ເຈົ້າຂອງບ້ານກຳລັງສົນສະຕິອາຣົມຂອງຕົນຢູ່ເທິງ ຕຽງນອນນັ້ນ ພວກເຮົາມາພາກັນສຳຣວດເບິ່ງບ້ານຂອງລາວສ່ວນ ເນາະ ບ້ານຂອງແຄລລາເປັນຫ້ອງເຊົ່າທີ່ມີເຄື່ອງເຮືອນຄົບ ຄ່າເຊົ່າ ອາທິດລະ ๗ ດອລລາ ແລະ ກໍ່ບໍ່ມີຫຍັງຈະຂັດສົນ ກ່ຽວກັບເຣື່ອງຄ່າ ເຊົ່າຫ້ອງນີ້.

ບັດນີ້ຢູ່ຊັ້ນລຸ່ມມີແຈບໜັງສືແຈບນຶ່ງ ແຕ່ເປັນແຈບນ້ອຍໂພດ ໃສ່ ໜັງສືກະບໍ່ໄດ້ ມີກະດິ່ງໄຟຟ້າອັນນຶ່ງ ແຕ່ຄືສີໃຊ້ການບໍ່ໄດ້ຄືກັນ ພ້ອມ ທັງມີຊື່ຕິດຢູ່ຂ້າງປະຕູວ່າ "ເຈມຊ໌ ແຄລລິງແຮມ ຢັງ".

ຕອນເວົ້າຊື່ ຕິດໄວ້ບ່ອນນັ້ນທຳອິດທຳອໍ່ນັ້ນ ທ້າວເຈມຊ໌ ແຄລ ລິງແຮມ ຢັງ ໄດ້ເງິນເດືອນອາທິດນຶ່ງ ๓๐ ດອລລາ ມາບັດນີ້ລາວ ໄດ້ແຕ່ອາທິດລະ ๔๐ ດອລລາ ຊື່ລາວກໍ່ປາກົດວ່າຢາກຍາວໂພດແລະ ສຳຄັນຂຶ້ນອີກ ຊື່ນັ້ນຄວນຈະເປັນ "ເຈມຊ໌ ດີ ຢັງ" ສັ້ນເຂົ້າກ່ວາ ເກົ່າ ແຕ່ເຖິງຢ່າງໃດກໍ່ດີ ເມື່ອເຈມຊ໌ ແຄລລິງແຮມ ຢັງ ເຂົ້າມາ ໃນຫ້ອງເຮືອນ ອັນເປັນທີ່ຢູ່ຂອງລາວແລ້ວ ຊື່ຂອງລາວກໍ່ແຮງສັ້ນເຂົ້າ ໄປອີກ ເພາະວ່ານາງ ເຈມຊ໌ ແຄລລິງແຮມ ຢັງ ຈະເອົາແຂນຂອງ ນາງກອດຮັບຜູ້ເປັນຜົວ ແລ້ວເອີ້ນວ່າ "ຈິມ" ທ່ານຜູ້ອ່ານກໍ່ໄດ້ພົບກັບ ນາງແລ້ວເດ ໃນຕອນຕົ້ນນັ້ນ ຄືນາງແຄລລານັ້ນເອງ.

ແຄລລາ ເຊົ່າໄຫ້ແລ້ວ ກໍ່ລ້າງໜ້າສ່ວຍຕາ ໃຫ້ສວາດສ່ວາມ ນາງມາຢືນຢູ່ໜ້າປ່ອງຢ້ຽມ ແລ້ວຫລຽວລົງຕະລ່າງ ໂດຍບໍ່ສົນໃຈ ມໍ່ຫຍັງໜົດ. ມື້ນີ້ກໍ່ຈະເປັນມື້ກຣິສມາສແລ້ວ ນາງມີເງິນພຽງແຕ່ ນຶ່ງດອລລາກັບ ๘๗ ເຊັນ໌ນັ້ນ ຈະເຮັດຈັ່ງໃດດີ?ດ້ວຍເງິນຈຳນວນນີ້ ນາງຈະຊື້ຂອງຂວັນໃຫ້ ຈິມ ສຸດທີ່ຮັກຂອງນາງ ແຄລລາໄດ້ພຍາຍາມ

ທ້ອນເງິນໄວ້ ເທື່ອລະເລັກລະນ້ອຍມາ ເປັນເວລາຫລາຍເດືອນແລ້ວ ຈຶ່ງໄດ້ເງິນຈຳນວນນັ້ນ ເງິນເດືອນຜົວ ອາທິດລະ ๔๐ ດອລລາ ກໍ່ບໍ່ຫລາຍປານໃດ ທຸກສິ່ງທຸກຢ່າງ ທີ່ຈຳເປັນ ປາກົດວ່າ ເພງເກີນກ່ວາ ການຄາດຄະເນຂອງນາງ.

ມີເງິນແຕ່ນຶ່ງດອລລາກັບ ๘๗ ເຊັນ ທີ່ນັ້ນ ສຳລັບ ຈະຊື້ຂອງ ຂວັນໃຫ້ຈິມ ຈິມ ຂອງນາງ ແດລລາ ໃຊ້ເວລາຢ່າງມີຄວາມສຸຂໃນ ການວາງໂຄງການທີ່ຈະຊື້ຂອງດີໆຢ່າງໃດຢ່າງນຶ່ງໃຫ້ຜົວຮັກ ຂອງນັ້ນ ຈະຕ້ອງດີພໍ ແລະໃຫ້ສົມກັບກຽດທີ່ຕົນໄດ້ເປັນເມັຍຂອງຊາຍຄົນນີ້ອີກ.

ໃນຫ້ອງເຮືອນຂອນນີ້ ມີແຫ່ວນເໜ້ອວັນນຶ່ງ ຕິດຕັ້ງຢູ່ຂ້າງປ່ອງຢ້ຽມ ເປັນແຫ່ວນໜາແຄບໆ ເວລາເພງ ກໍຈະເຫັນແຕ່ບາງສ່ວນຂອງ ຮ່າງກາຍທີ່ນັ້ນ ເຖິງຢ່າງໃດກໍດີ ຖ້າ ເປັນຜູ້ຖືບຮ່າງນ້ອຍບາງໄປແຍງ ຟ້າວແຍງໄວໆແມ່ ລາວກໍຈະອາດສາມາດ ສອງເຫັນເງົາຕົນເອງໄດ້ ຢ່າງຈົບງາມ ສຳລັບແດລລາແລ້ວ ນາງບໍ່ມີບັນຫາ ເພາະນາງເປັນ ຄົນນ້ອຍບາງຮ່າງຄົງເໝັ້ນ ເພາະສັ້ນ ນາງຈຶ່ງສອງເຫັນເງົາເຈົ້າ ຂອງເອງວ່າດີສົມຄວນ.

ແດລລາ ຫ່ອຍພ້າທີ່ຈາກປ່ອງຢ້ຽມ ມາແຍງແຫ່ວນຢ່າງກະທັນ ທັນ ຄາວນຶ່ງ ດວງຕາຂອງນາງ ກໍສົດໃສຂຶ້ນ ແຕ່ດວງໜ້າຄ່ອດສີ ບໍ່ມີ ເລືອດ ແລ້ວໃນທັນໃດນັ້ນ ນາງກໍປ່ອຍຜົມອັນຍາວ ລາກຂ່ວງຂອງ ນາງລົງ.

ຜົວເມັຍເຈມ໋ແດລລີ່ງແຮມຢັ່ງຄູ່ນີ້ ມີຄວາມພູມໃຈນຳສິ່ງຂອງ ສອງອັນທີ່ເປັນສົມບັດອັນລ້ຳຄ່າຂອງເຂົາເຈົ້າ ອັນທີ່ນຶ່ງແມ່ນ ໂມງຄຳ ຂອງຈິມ ໂມງພ່ອຍນີ້ ເຄີຍເປັນກັມມະສິດ ຂອງພໍ່ຂອງຈິມມາກ່ອນ

ແລະກ່ອນໜ້ານັ້ນອີກ ໂນ ງຄຳ ໜ່ວຍນີ້ກໍ ເຄີຍ ເປັນ ສົມບັດ ຂອງ ພໍ່ ປູ ຂອງ ຈິມ ມາ ແລ້ວ ເຊັ່ນ ດຽວ ກັນ ສ່ວນ ສິ່ງ ຂອງ ອັນ ທີ ສອງ ທີ ເຂົາ ເຈົ້າ ພູມ ໃຈ ທີ ສຸດ, ນັ້ນ ແມ່ນ ຜົມ ຂອງ ແດ ລ ລາ.

ຖ້າ ວ່າ ມີ ຣາ ຊຸ ນີ ອີ ງ ໃດ ອີ ງ ນຶ ງ ໄດ້ ມາ ປະ ທັບ ຢູ່ ໃກ້ ກັນ ກັບ ເຂົາ ເຈົ້າ ແລ້ວ ແດ ລ ລາ ຈະ ສະ ຜົມ ຂອງ ລາ ວ ຢູ່ ບ ອ ນ ໃດ ບ ອ ນ ນຶ ງ ທີ ສາ ມາ ດ ເຮັ ດ ໃຫ້ ຣາ ຊຸ ນີ ອີ ງ ນີ້ ຫລົ ງ ເຫັ ນ ເພ ຣະ ແດ ລ ລາ ຮູ້ ວ່ າ ຜົ ມ ຂ ອ ງ ນ າ ງ ງ າ ມ ກ ວ່ າ ເ ຄ ື ່ ອ ງ ເ ຮ ້ ເ ຄ ື ່ ອ ງ ຊ ິ ງ ໃ ດ ໆ ຂ ອ ງ ຣ າ ຊ ຸ ນ ີ ນ ັ ້ ນ ອ ີ ກ .

ຖ ້ າ ວ ່ າ ມ ີ ຣ າ ຊ ຸ ງ ໃ ດ ນ າ ປ ະ ທ ັ ບ ຢ ູ ່ ໃ ນ ເ ຮ ື ອ ນ ຫ ລ ັ ງ ດ ຽ ວ ກ ັ ນ ກ ໍ ດ ີ ສ ົ ມ ບ ັ ດ ພ ັ ສ ຖ າ ມ ຂ ອ ງ ຣ າ ຊ ຸ ງ ນ ັ ້ ນ ກ ໍ ຈ ະ ບ ໍ ່ ສ າ ມ າ ດ ທ ຽ ບ ໄ ດ ້ ກ ັ ບ ໂ ນ ງ ຄ ຳ ຂ ອ ງ ຈ ິ ມ ບ ັ ດ ພ ິ ບ ກ ັ ບ ຣ າ ຊ ຸ ງ ເ ທ ື ່ ອ ໃ ດ ຈ ິ ມ ກ ໍ ຈ ະ ໄ ດ ້ ແ ຕ ່ ແ ຍ ງ ໂ ນ ງ ຂ ອ ງ ໂ ຕ ເ ອ ງ ຢ ູ ່ ບ ໍ ່ ເ ຊ ົ ່ ງ ຈ ິ ມ ຮ ູ ້ ດ ີ ອ ີ ກ ວ ່ ງ ບ ໍ ່ ມ ີ ຣ າ ຊ ຸ ງ ໃ ດ ມ ີ ໂ ນ ງ ຢ ່ ງ ດ ີ ແ ລ ະ ມ ີ ຄ ່ ງ ທ ໍ ່ ໂ ນ ງ ຂ ອ ງ ລ ງ ວ .

ຜ ົ ມ ອ ັ ນ ລ ະ ອ ຽ ດ ອ ່ ອ ນ ຂ ອ ງ ແ ດ ລ ລ ງ ຖ ືກ ປ ະ ປ ່ ອ ຍ ຍ ງ ວ ລ ິ ງ ຈ ິ ມ ພ ຽ ງ ຂ ່ ອ ງ ເ ຫ ລ ື ້ ອ ມ ງ ງ ງ

ແຄລລາ ແລ່ນຂຶ້ນໄປຮອດຊັ້ນທີ່ສອງ ແລ້ວຢຸດຫັນໃຈຄາວນຶ່ງ ຈຶ່ງໄດ້ພົບກັບເຈົ້າຂອງຮ້ານ.

ນາດາມໂຊໂຟຣນນີ ເປັນຄົນໃຫຍ່ ຜິວຂາວ ເສງຕາອັນເຢັນ ຊາຂອງລາວຫລຽວມາເບິ່ງແຄລລາ ... ແລ້ວ ...

ແຄລລາຖາມຂຶ້ນວ່າ "ເຈົ້າສິຊື້ຜົມຂອຍບໍ່"

"ຂອຍຮັບຊື້ຜົມ" ນາດາມ ໂຊໂຟຣນນີ ເວົ້າ "ຖອດໝວກເຈົ້າອອກ ແລ້ວໃຫ້ຂອຍເບິ່ງຜົມເຈົ້າກ່ອນ".

ເມື່ອຖອດໝວກອອກ ກະເສນ້ຳສີນ້ຳຕານກໍໄຫລຕົກລົງມາ.

"ຊາວດອລລາ" ນາດາມໂຊໂຟຣນນີເວົ້າ ພ້ອມກັບຍົກຜົມສັ້ງຕຍງເບິ່ງນ້ຳໜັກ.

"ເອົາເງິນໃຫ້ຂອຍດຽວນີ້" ແຄລລາເວົ້າ

ບັດນີ້ປານກັບວ່າແຄລລາເຫາະເໜືອເດີນອາກາດໄດ້ ພາຍໃນສອງຊົ່ວໂມງຕໍ່ມາ ນາງອອກຈາກຮ້ານນັ້ນ ເຂົ້າຮ້ານນີ້ ອອກຈາກຮ້ານນີ້ ເຂົ້າຮ້ານນັ້ນ ເພື່ອຊອກຫາຊື້ຂອງຂວັນສຳລັບຈິມ.

ໃນທີ່ສຸດ ແຄລລາກໍຫາຊື້ໄດ້ ຂອງຂວັນທີ່ຫາຊື້ໄດ້ນີ້ ຖືກປະດິດຂຶ້ນມາສະເພາະຈິມຄົນດຽວແທ້ໆ ນາງໄປຊອກເບິ່ງໜົດສູ້ຮ້ານແລ້ວໃນເມືອງນີ້ ບໍ່ມີຂອງສິ່ງໃດຄືຂອງຂວັນທີ່ນາງຊື້ມານີ້ຈັກຢ່າງ.

ຂອງທີ່ນາງຊື້ນັ້ນ ແມ່ນສາຍໂມງ ເປັນສາຍໂມງຄຳ ຕີແບບງ່າຍໆ ສ່ວນຣາຄານັ້ນຂຶ້ນຢູ່ກັບຄຸນນະພາບແລະເນື້ອແທ້ ຂອງທອງຄຳເອງ ຍ້ອນວ່າເຂົາຕີແບບງ່າຍນີ້ແລ້ວ ພວກເຮົາຈຶ່ງຮູ້ໄດ້ວ່າ ມັນເປັນຂອງດີມີຣາຄາ ສິ່ງຂອງດີໆເປັນຈັ່ງຊີ້ສູ້ຈັນ.

ສາຍໂມງຄຳສາຍນີ້ ດີສົມກັບພ້ອຍໂມງຢ່າງແທ້ຈິງ.

ເມື່ອໄດ້ເຫັນແລ້ວ ແຄລລາ ຮູ້ໄດ້ທັນທີ່ວ່າ ຈິມ ຈະຕ້ອງເປັນ
ເຈົ້າຂອງສາຍໂມງສາຍນີ້ຢ່າງບໍ່ຕ້ອງສົງໃສ ສາຍໂມງສາຍນີ້ ຄ້າຍຄື
ກັນກັບຈິມບໍ່ມີຜິດ ມີຫ້ວງຄ່ໍາ ແລະຄວາມເປັ໋ກເປັນ ທ້ວງຄົມແລະຂອງ
ມີຄຸນສົມບັດທ້ວງສອງຢ່າງນີ້ປົນກັນ.

ເມື່ອເອົາສາຍໂມງສາຍນີ້ໃສ່ກັບໂມງຂອງລາວແລ້ວ ຈິມກໍຈະ
ສາມາດແຍງໂມງ ແລະເບິ່ງເວລາຢູ່ບ່ອນໃດກະໄດ້ຕາມຊອບໃຈ ແຕ່
ກ່ອນນັ້ນ ເຖິງວ່າ ຈິມ ມີ່ໂມງຈະດີງາມ ປານໃດກໍ່ຕາມ ແຕ່ບໍ່
ເຄີຍມີສາຍງາມປານນີ້ຈັກເທື່ອ ບັດຢາກຮູ້ຈັກເວລາຍາມໃດ ຈິມຕ້ອງ
ລັກເບິ່ງໂມງຜູ້ດຽວ ຢ່າງບໍ່ໃຫ້ຜູ້ອື່ນຫລຽວເຫັນ.

ບັດກັບມາຮອດບ້ານແລ້ວ ສະຕິອາຣົມຂອງແຄລລາ ຈຶ່ງຄ່ອຍ
ສງົບລົງແດ່ໜ້ອຍນຶ່ງ ນາງພະຍາຍາມຕັ້ງຕົ້ນຄິດຫາ ເຫດຫາຜົນ ໃຫ້ດີ
ພ້ອມທ້ງພະຍາຍາມເຊື່ອພຣຸດ ຈາກສິ້ງທ້ງປວງ ຈຶ່ງເກີດຈາກ ເຫດ
ການທີ່ຜ່ານມາທ່ວງທ່ຽງນີ້ ຄວາມຮັກແລະຄວາມທີ່ຢາກຮ່ວມຂອງສິ່ງ
ໃດສິ່ງນຶ່ງໃຫ້ດ້ວຍໃຈອັນກ້ວາງຂວາງນີ້ ເມື່ອຍວກເຂົ້າກັນແລ້ວ ບໍ່ສາ
ມາດເຊື່ອງຊ້ອນຮອຍພຣຸດແລະຄວາມຮູ້ສຶກໃດໆໄດ້ທ້ງສິ້ນ ການທີ່ຈະ
ເຊື່ອງພຣຸດເຫລ່ານີ້ໄດ້ ບ່ແມ່ນຂອງງ່າຍດາຍເລີ - ເພື່ອນທີ່ຮັກ.

ພາຍໃນ ๔๐ ນາທີ່ຕ່ໍມາ ປາກົດວ່າຫ້ວທີ່ມີຜົມສັ້ນຂອງແຄລລາ
ເປັນຕາເບິ່ງຂຶ້ນມາແດ່ ແຄລລາຕ່ອນນີ້ຄ້າຍຄືເດັກນັກຮຽນຜູ້ນຶ່ງບໍ່ມີຜິດ
ນາງຢືນເຍ້ງເບິ່ງໂຕເອງຢູ່ໜ້າແຫ່ວນັ້ນດົນພໍສົມຄວນ.

ແຄລລາ ຈົ່ມຜູ້ດຽວ່ວ່າ "ຄັ້ນຖ້າຈິມບໍ່ຂ້າຂ່ອຍຖິ້ມ ກ່ອນລາວສິ
ຫລຽວມາເບິ່ງຂ່ອຍໃຫ້ອີກນັ້ນ ລາວຄົ໋ສິເວ້ວ່າ ຂ່ອຍນີ້ປານກັບພວກຜູ
ຍິງຮ້ອງ ເພງເຕັ້ນລຳໃນບາ ທີ່ເຫັນເຫ່ແຕ່ເງິນນັ້ນແລ້ວ ສິໃຫ້ເຮັດຈັ່ງ

ໃດນໍ! ດ້ວຍເງິນນຶ່ງດອລລາກັບ ຫຼກ ເຊັ່ນທໍ່ນັ້ນ ຂ້ອຍສິເຮັດຫຍັງໄດ້ ລະ?"

ພໍເວລາ ກ ໂມງແລງຂອງທຸກໆມື້ ເຂົ້າແລງຂອງຈິມກໍຖືກຈັດ ແຈງແຕ່ງຫາໄວ້ຮຽບຮ້ອຍ.

ຈິມ ບໍ່ເຄີຍກັບເມືອບ້ານຊ້ໍາຈັກເທື່ອ. ແຄລລາກໍ່ສາຍໂມງ ໄວ້ໃນມືຢ່າງເໝັ່ນ ແລ້ວນັ່ງຄອຍຖ້າຢູ່ໃກ້ປະຕູ ຊຶ່ງຈິມເຄີຍກາຍເຂົ້າ ມາ ຕໍ່ມາບໍ່ດົນ ນາງໄດ້ຍິນສຽງຍ່າງຢ່າງຈິມ ດັງມາຈາກທ້ອງທາງ ນອກ ເຮັດໃຫ້ໃບໜ້າຂອງນາງ ຄ່ອຍສີໄປອີກຄາວນຶ່ງ ແຕ່ໃດໆ ມາ ນາງເຄີຍລະລຶກເຖິງພະຜູ້ເປັນເຈົ້າ ຢ່າງງຽບ ໆ ຢູ່ບໍ່ຂາດ ແຕ່ສໍາ ຮັບເວລານີ້ແລ້ວ ນາງຮ້ອງອອກມາວ່າ "ຂໍໃຫ້ພະຜູ້ເປັນເຈົ້າ ຊ່ວຍ ເຮັດໃຫ້ຈິມຄິດວ່າຂ້ອຍຍັງງາມຢູ່ຄືເກົ່າແດ່ທ້ອນ".

ປະຕູໄຂອອກ ຈິມ ກ້ຍ່າງກ້າວເຂົ້າມາໃນເຮືອນ ເບິ່ງຊິງຄີ ລາວຈ່ອຍລີງ ແລະສີໜ້າກໍ່ບໍ່ຍິ້ມແຍ້ມຄືເກົ່າ ອະນິດຈາ! ຈິມອາຍຸໄດ້ ຄ0 ປີ ທໍ່ນັ້ນ ແຕ່ມີຄວບຄິວທີ່ຕ້ອງຮັບຜິດຊອບແລ້ວ ສໍາລັບລາວເອງ ລາວກໍ່ຕ້ອງການຢາກໄດ້ເສື້ອຫົ່ມກັນໜາວໂຕໃໝ່ ຢາກໄດ້ເຄື່ອງຂອງ ເມືອນື່ມອີກ ແລະຖ້ງມືສໍາລັບທໍ່ຫຸ້ມມືໃຫ້ອຸ່ນກໍ່ບໍ່ທັນມື.

ຫລັງຈາກຜ່ານປະຕູເຂົ້າມາໃນເຮືອນແລ້ວ ຈິມ ຢຸດຢູ່ໜ້າປະຕູ ບໍ່ເພັ່ງບໍ່ຕີ່ງ ງຽບປານນາຍພານເຂົ້າໄປໃກ້ນິກ - ຈິມແນມເບິ່ງ ແຄລລາຢ່າງແປກປລາດ ແລະປາກົດວ່າມີສິ່ງໃດສິ່ງນຶ່ງທີ່ຊ້ອນ ເຊື່ອງ ໄວ້ໃນເສງຕາຄວງນັ້ນຊຶ່ງແຄລລາເອງກໍ່ບໍ່ສາມາດຈະເຂົ້າໃຈໄດ້ແລະ ທັງເຮັດໃຫ້ຜູ້ເປັນເມັຍຮູ້ສຶກຢ້ານກົວຂຶ້ນມາຢ່າງບອກບໍ່ຖືກ ສີໜ້າຂອງຜູ້ ເປັນຜົວກໍ່ບໍ່ໃສ່ອາຈະສແດງອອກມາເຖິງຄວາມໂກດເຄືອງແຕ່ຢ່າງໃດ

ຈະວ່າຕື່ນເຕັ້ນກໍ່ບໍ່ແມ່ນອີກ ຈະຕ້ອງເປັນເຮື່ອງໃດເຮື່ອງນຶ່ງທີ່ແຄລລາ
ໄດ້ກຽມຮັບໄວ້ ແລ້ວກໍ່ຊໍ້ຳບໍ່ແມ່ນອີກ ຈິມ ພຽງແຕ່ຫລຽວເບິ່ງແຄລລາ
ດ້ວຍສາຍຕາອັນແປກປລາດທີ່ຈະທິບາຍບໍ່ຖືກທັ້ນ.

ຜູ້ເປັນເມັຍເລີຍລຸກຍ່າງເຂົ້າໄປຫາ...

ທັງໃຫ້ແລະເວົ້າວ່າ "ຈິມທີ່ຮັກ-ໂປຣດຢ່າໄດ້ແນມເບິ່ງນ້ອງ
ແບບນີ້ຊ້ອນ-ນ້ອງໄດ້ຕັດຜົມ ແລະໄດ້ເອົາໄປຂາຍແລ້ວ-ນ້ອງ ບໍ່ສາ
ມາດຈະມີຊີວິດຢູ່ຕໍ່ໄປໄດ້ຖ້າບໍ່ມີຂອງຂວັນໃຫ້ອາຍໃນມື້ກຣິສມາສ--ອີກ
ບໍ່ດົນຜົມນ້ອງກໍ່ສີຍາວຄືນຄືເກົ່າ ອ້າຍຄືສີບ່ວ່າຫຍັງໃຫ້ນ້ອງຕິ-ແມ່ນບໍ?
ຜົມນ້ອງຍາວໄວ-ໄວ. ອາ.. ມື້ກໍ່ເປັນມື້ກຣິສມາສແລ້ວ ພວກເຮົາ
ມາມ່ວນຊື່ນກັນສະເພາະ! ອ້າຍຄືຍັງບໍ່ທັນຮູ້ເທື່ອຕິ-ວ່າ - ນ້ອງມີ
ຂອງຂວັນດີ້ດີ ສຳລັບອ້າຍ".

"ນ້ອງ-ໄດ້ຕັດຜົມນ້ອງ-ຊັ້ນນະ?" ຈິມຖາມຊ້ຳໆ ປາກົດວ່າ
ລາວໄດ້ໃຊ້ຄວາມພຍາຍາມບໍ່ໜ້ອຍທີ່ຈະເຂົ້າໃຈໃນສິ່ງທີ່ເກີດຂຶ້ນນັ້ນ.

"ຕັດແລະຂາຍໄປແລ້ວ" ຜູ້ເປັນເມັຍຕອບ "ດຽວນີ້ອ້າຍບໍ່
ມັກນ້ອງອີກຫວະ? ນ້ອງກໍ່ຄືນ້ອງຄົນເກົ່າ-ເຖິງແມ່ນວ່ານ້ອງ ຈະບໍ່ມີ
ຜົມ".

ຈິມຫລຽວໄປທົ່ວຫ້ອງແລະເວົ້າວ່າ:

"ນ້ອງ ວ່ານ້ອງໄດ້ຂາຍຜົມໄປແລ້ວນະ?"

"ອ້າຍບໍ່ຕ້ອງຊອກຫາກະຕາມ - ນ້ອງໄດ້ຂາຍໄປແລ້ວ- ຟັງ
ນ້ອງສິເລົ່າໃຫ້ຟັງ - ນ້ອງໄດ້ຂາຍໄປແລ້ວອີ່ຫລີ - ອັນ - ອາ -
ມື້ອື່ນນີ້ ກໍ່ເປັນມື້ກຣິສມາສແລ້ວ ກະຣຸນາຢ່າສຸ້ຍນ້ອງເທາະ ເພາະ
ນ້ອງຂາຍຜົມໄປເທື່ອນີ້ກໍ່ຂາຍເພື່ອອ້າຍຄົນດຽວທັ້ນ ບາງທີຖ້າໃຜຈະ

ນັບເສັ້ນຜົມຂອງນ້ອງທີ່ມີເທິງຫົວນີ້ ເປັນເສັ້ນໆ ກໍອາດຈະນັບໄດ້ ແຕ່ ວ່າບໍ່ມີມະນຸດຄົນໃດ ຈະສາມາດນັບຄວາມຮັກຂອງນ້ອງທີ່ມີຕໍ່ອ້າຍໄດ້. ຈົນ ມາເຫາະ ມາກິນເຂົ້າແລງກັນສະເໝາະ".

ຈົນ-ໂອບເຊນກອດແຄລລາໄວ້ - ບັດນີ້ພວກເຮົາມາສັງເກດ ເບິ່ງອີກມຸມນຶ່ງຂອງຊີວິດຈັກ ໑໐ ວິນາທີເໝາະ? ມາລອງປຽບທຽບ ເບິ່ງ - ການອອງຊີບອາທິດລະ ໒ ດອລລາ ຫລືປີລະ ລ້ານດອລລາ ມີຄວາມແຕກຕ່າງກັນຈັ່ງໃດ? ອາດຈະມີຜູ້ໃດຜູ້ນຶ່ງ ສາມາດຕອບຄຳ ຖາມນີ້ໄດ້ຢູ່ ແຕ່ວ່າຄິສຕອບບໍ່ຖືກຕ້ອງດອກ ເມຈາຍໄດ້ນຳຂອງຂວັນ ອັນມີຄ່າລິ່ງມາແລ້ວ ແຕ່ວ່າບໍ່ແມ່ນເອົາມາສຳລັບໃຫ້ເຂົາເຈົ້າທັງສອງ ຄືນນີ້ ລາຍລະອຽດຂອງເຣື່ອງຈະໄດ້ນຳມາອະທິບາຍຕໍ່ລິ່ງໄປນີ້.

ຈົນ ຈັກເອົາຫໍ່ຂອງ ໑໑ກມາຈາກເສື້ອໃຫ່ຍັກໜາວຂອງລາວ ແລ້ວໂຍນລິ່ງເທິງໂຕ໊ະ ພ້ອມກັບເວົ້າວ່າ:

"ແຄລ - ອ້າຍຢາກໃຫ້ນ້ອງເຂົ້າໃຈອ້າຍ ໃຫ້ດີກ່ວານີ້ ບໍ່ມີ ສິ່ງໃດໃນໂລກ ສາມາດເຮັດໃຫ້ອ້າຍຮັກນ້ອງນ້ອຍລິ່ງ ເຖິງແມ່ນວ່າ ນ້ອງໄດ້ຕັດຜົມໄປແລ້ວກໍຕາມ ແຕ່ເມື່ອໜ້ານ້ອງໄຂຫໍ່ຂອງເທິງໂຕ໊ະ ນັ້ນ໑໑ກແລ້ວ ນ້ອງຈຶ່ງຈະຮູ້ໄດ້ເອງວ່າ ອ້າຍມີຄວາມຮູ້ສຶກ ຈັ່ງໃດ ຕໍ່ນ້ອງ ອ້າຍຍ່າງເຂົ້າເຮືອນມາກ່ອນ".

ມືອມືອັນຂາວສອາດຂອງແຄລລາ ເກາະຫໍ່ເຈ້ຍນັ້ນ໑໑ກແລະ ແລ້ວກໍຮ້ອງຂຶ້ນດ້ວຍຄວາມດີໃຈ ຕໍ່ມາຄວາມດີໃຈນັ້ນ ກໍເລີຍກາຍເປັນ ນ້ຳຕາໄຫລອາບເຕ້ມຂອງນາງ.

ເພາະຢູ່ໃນຫໍ່ເຈ້ຍນັ້ນ ມີຫວີນ້ອຍໆທີ່ໃຊ້ເປັນກິບໜີບຜົມ - ຫວີ ເຫລົ່ານີ້ແຄລລາ ໄດ້ພົບເຫັນເຂົາຢ່ອງຂາຍໃນຮ້ານແຫ່ງນຶ່ງ ແລະຄິດ

ນັກມາດົນນານແລ້ວ ເປັນຫວີທີ່ສວຍງາມ ປະດັບດ້ວຍເຄື່ອງເຮ່ຢ່າງດີ ເພາະສຳລັບຜົມຂອງແຄລລາຢ່າງຄັກແນ່ ແຄລລາ ເຄີຍຮູ້ຢູ່ແຕ່ໃດ່ວ່າ ຣາຄາຂອງມັນແພງ ຂນາດຈິມນາງບ່ມີປັນຍາທີ່ຈະຊື້ໄດ້ ນາງໄດ້ແຕ່ ໄປເລາະເພ່ງ-ແຍງແລ້ວແຍງອີກ ໂດຍບ່ຄາດຄິດມາກ່ອນເລີຍວ່າຕົນ ຈະມີໂອກາດໄດ້ເປັນເຈົ້າຂອງແລະມາຍັດມື້ ຫວີເຫ່ລ່ານີ້ ໄດ້ຕົກມາ ເປັນສົມບັດຂອງນາງໂດຍສົມບູນແລ້ວ - ແຕ່ນາງບ່ມີຜົມກໍ່ສີໄດ້ເອົາຫີບ ອັນສວຍງາມເຫ່ລ່ານີ້".

ແຄລລາ ໄດ້ແຕ່ນຳຫີບຫວີນັ້ນໄວ້ໃນມື ທັງຍ່ຶ້ມແໜບໄວ້ກັບ ດວງໃຈ ແລະໃນທີ່ສຸດ ນາງກໍ່ກ້າພໍທີ່ຈະເງີຍໜ້າຂຶ້ນເບ່ິງຜົວ ພ້ອມກັບ ເວ້ົ້າວ່າ "ຈິມ - ຜົມນ້ອງນີ້ຍາວໄວ້ຢູ່ດອກ".

ແລ້ວ ແຄລລາ ໂດດເຕ້ັນຂຶ້ນ ທັງຮ້ອງໄຫ້ ໆໆກມາຢ່າງແຮງ "ໂອ! ໂທ!"

ຕອນນັ້ນ ຈິມ ຍັງບ່ທັນໄດ້ເຫັນຂອງຂວັນອັນສວຍງາມຂອງຕົນ ເທ່ືອ ເມ່ືອຮູ້ສຶກໂຕ ຜູ້ເປັນເມຍ ຈ່ຶງໄດ້ແຍ້ມໆກໃຫ້ເບ່ິງ ປາກົດວ່າ ຂອງທີ່ຢູ່ໃນຝ່າມືນັ້ນສ່ົງເສງເຫລ່ືອມມາບໆ ປຽບສະເໜ່ືອນຊີວິດຈິດໃຈ ຂອງນາງທ່ີເຕັມໄປດ້ວຍຄວາມຮັກອັນອົບອຸ່ນທ່ີມ່ີຕ່ໍຈິມ.

"ຈິມ - ນ້ີມະ - ຄັກບ່? ນ້ອງໄດ້ຂໍ່ອກ່ັມທາສາຍໂມງອັນນ້ີ ກ່ໍ້ບ້ານກ່ໍ້ເມ່ືອງ ແຕ່ນ້ີ່ຕ່ໍໄປ ອ້າຍຊ່ືເບ່ິງໂມງຂອງອ້າຍ ນ້ີລະຮ້ອຍ ເທ່ືອກະໄດ້ - ເອົາມະ - ສ່ົງໂມງອ້າຍມາໃຫ້ນ້ອງດຸ - ນ້ອງຢາກ ເບ່ິງວ່າ ໂມງກັບສາຍມັນສີສົມກັນບ່?".

ຈິມໂຍບນ່ັງລົງ - ທັງຍ້ິມຈິດໆ - ແລ້ວເວ້ົ້າວ່າ "ແຄລ ລາ ເອົາຂອງຂວັນກຣິສມາສຂອງພວກເຮົານັ້ນ ໄປໄວ້ທ່ີອ່ືນຈັກບ່ຶດກ່ອນ

ไป๊ มันงามโผดสำลับจะใฮ้ในปัดจุบันทันด่อมนี้ ง้ายได้ขาย โมงห่อยมั้นแล้อ เผื่อฮื้หวีมาเป้นของขวันให้มั้นๆ บัดนี้พวกเฮาก็มเว้าเสงได้ละดีเมาะ".

ท่านคิงซาบปู่แล้อ่า เมจาย เป้นคิมสลาดพรูงใด เพิ่นเป้นผู้ธรบคอบ เอาของขวันมาต้อมพะเยซูน้อย ผู้เกิดใพ่ พวกเพิ่นเป้นผู้ทำอิด ที่ให้ของขวันกะริสมาส เมื่อเป้นผู้สลาดเฒ่นมี้ เพิ่นก็ต้องธรบคอบในกามให้ของขวันเฒ่นดูอกัน และเอาเจ้าบ่ใส่อ่าเป้นคิมสลาดธรบรู้พ่ใด แต่ละคิม ขายของอันลำ่คาของติม เผื่อฮื้ของขวันให้กันและกัน แต่เถิงย่างใดก็ดี ข้าพะเจ้าขอบอกกับผู้ที่เป้นคิมสลาดในยุกมี้จักพ่อย่า: "คิมผู้ที่สลาดที่สุด แม่นสองผัวเมียคู่มี้ขันละ เอาเจ้าทังเป้นคิมธรบคอบ ในกามเป้นผู้รับ และผู้ให้ของขวันอีกด้วย เอาเจ้าฮู้ความต้องกามของกันและกันดี ธอมคอามแล้วเอาก็คีกัน กับเมจายมั้นเองๆ!" ●

ສອງສຸພາບບຸຣຸດໃນມື້ແຫ່ງສກົວ

ມື້ນຶ່ງໃນຮອບປີ ຊຶ່ງເປັນມື້ຂອງພວກເຮົາໂດຍສະເພາະ ມື້ນັ້ນຄືມື້ທີ່ຊາວອະເມຣິກັນທຸກຄົນ ພ້ອມກັບເມືອຖືນຄາມບ້ານຊ່ອງຂອງຕົນ ເພື່ອຮ່ວມຮັປທານອາຫານທ່ຽງກັບຄອບຄົວ ມື້ນັ້ນແຫລະ ເປັນມື້ສັນວັນດີ ອາຫານທ່ຽງ ທີ່ຈັດເປັນພິເສດ ໃນວັນອັນສຳຄັນເຊັ່ນນີ້ ທ່ານປະທານາທິບໍດີເຄີຍອອຍພ້ອມແດ່ພວກເຮົາທຸກປີ.

ບາງເທື່ອ ເພິ່ນກໍເວົ້າກ່ຽວກັບຜູ້ຄົນທີ່ໄດ້ສລະຊີວິດເພື່ອສກົວ ຄັ້ງທຳອິດ ພວກປູຣິເຕນ (ເປັນພວກຄົນທີ່ເຄັ່ງຄັດໃນສາສນາແລະສິນທັມ) ເຂົາເຈົ້າຢູ່ໃນຈຳພວກຄົນ ທີ່ພາກັນມາຕັ້ງຮາກຖານຢູ່ຕາມເຄມຝັ່ງມະຫາສມຸດອັດແລນຕິກ ພວກເຮົາກໍຈື່ຈຳເຣື່ອງຣາວກ່ຽວກັບເຂົາເຈົ້າບໍ່ໄດ້ຄັກ.

* ເທວສກົວ: ມື້ຂອບຄຸນພະເຈົ້າຂອງຊາວອະເມຣິກັນ.

ແຕ່ເຂົ້າເຈົ້າເປັນພວກຄົນທີ່ກິນໄກ່ງວງເປັນອາຫານໃນມື້ສລອງ ວັນຂອບຄຸນພຣະເຈົ້າຄັ້ງທຳອິດ ດັ່ງນັ້ນ ໄທເຮົາຈຶ່ງຖືເປັນປະເພນີ ສືບເນື່ອງກັນມາຈົນເທົ່າທຸກວັນນີ້ ຄືຖ້າພວກເຮົາມີເງິນພຽງພໍ ກໍພາກັນຊື້ໄກ່ງວງມາເປັນອາຫານໃນມື້ເທງສກີວິງ.

ແມ່ນແລ້ວໃນຂອບປີນຶ່ງ ເທງສກີວິງ ຫລືມື້ຂອບຄຸນພະເຈົ້າ ເປັນມື້ນຶ່ງ ຊຶ່ງຊາວອະເມຣິກັນຖືເປັນປະເພນີອັນແທ້ຈິງ.

ແລະຕໍ່ໄປນີ້ ແມ່ນເຣື່ອງທີ່ຈະສແດງໃຫ້ທ່ານຜູ້ອ່ານ ໄດ້ຮູ້ຈັກວ່າ ຢູ່ໃນຜືນແຜ່ນດິນແຫ່ງໃໝ່ນີ້ ພວກເຮົາກໍມີປະເພນີອັນເກົ່າແກ່ຄືກັນກັບແຫ່ງອື່ນ ມັນເປັນປະເພນີທີ່ປ່ຽນສະພາບໄປຢ່າງວ່ອງໄວ ກ່ວາປະເພນີທີ່ຢູ່ໃນປະເທດອັນເກົ່າແກ່ທັ້ງຫລາຍໃນໂລກ ເພາະປະເທດເຮົາເປັນປະເທດທີ່ເກີດໃໝ່ໃຫ່ຍລຸນ ແລະເຕັມໄປດ້ວຍຊີວິດຊີວາ ແລະພວກເຮົາເຮັດຫຍັງກໍເຮັດໄປຢ່າງຮວດເຮັວ.

ສຕັບຟີພິດ ນັ່ງລົງແປ້ນພ້າແຫ່ງນຶ່ງ ໃນສວນສາທາຣະນະຂອງນະຄອນນິວຢອກ ຊຶ່ງມີຊື່ວ່າ ຢູນຽນສແຕ໌ ມັນເປັນແປ້ນພ້າໂຕທີສາມທີ່ຢູ່ທາງຂວາມືຂອງທາງເຂົ້າມາຫາສວນທາງເບື້ອງຕາເວັນອອກ.

ລາວໄດ້ມານັ່ງຢູ່ແປ້ນພ້າແຫ່ງນີ້ໃນຕອນບ່າຍຂອງມື້ເທງສກີວິງ ຮວມເປັນເກົ້າເທື່ອແລ້ວ ແລະໝາຍຄວາມວ່າປີນີ້ເປັນປີທີ່ເກົ້າ ທີ່ລາວໄດ້ປະຕິບັດ ດັ່ງນີ້ມາເປັນເນື່ອງນິດ ທຸກປີທີ່ລາວມານັ່ງຢູ່ບ່ອນນີ້ ມີສິ່ງໃດສິ່ງນຶ່ງເກີດຂຶ້ນເຕ່ລາວທຸກເທື່ອ. ມັນເປັນສິ່ງມະຫັສຈັນທີ່ເຮັດໃຫ້ຫົວໃຈຂອງລາວເຕັມໄປດ້ວຍຄວາມປິຕິຍິນດີ ມັນເຮັດໃຫ້ຮ່າງກາຍສ່ວນອື່ນຂອງລາວ ຄືສ່ວນທີ່ຢູ່ໃຕ້ໜ້າກຫົວໃຈລົງໄປນັ້ນ ອຶ່ນໜີໜັນ.

ນີ້ເທງສກີວິງເຕ່ເກົ້າມາຫລັງນັ້ນ ສຕັບຟີພິດທອດທິ້ວທລາຍ ທີ່

ສຸດ (ປາກົດວ່າພວກຮັ່ງມີ່ສ່ວນຫລາຍຢາກຊ່ວຍເຫລືອພວກຕົກທຸກໄດ້ ຍາກໃຫ້ພົ້ນຈາກຄວາມທຸກທໍ ສະເພາະແຕ່ໃນມື້ເທົ່ງສກີວີ່ງເທົ່ານັ້ນ ນັ້ນກໍ່ມ່ານແປກປລາດບໍ່ນ້ອຍ!).

ແຕ່ສຳລັບມື້ເທົ່ງສກີວີ່ງປີ້ ພິດບໍ່ທໍ ເພາະລາວຫາກໍຮັບປະທານຈົນເຫລືອອີ່ມເກືອບໄປບໍ່ໄຫວ ພ່ອຍຕາສີ່ຂຽວອ່ອນຂອງລາວມົ້ນມືງກົ້ງຈາກໃບໜ້າສີ່ນ ຊຶ່ງຍັງມີເສດອາຫານຕິດຄ້າງຢູ່. ລາວຫັນໃຈສັ້ນ ທ້ອງຂອງລາວສວດອອກມາເທົ່ເລ ຈົນໂສ້ງເສື້ອເຄ້ງຍັດໃກ້ຈະແຕກອອກຍາມໃດກໍໄດ້ ເຄ່ືອງນຸ່ງລາວຂາດ ສາມາດສ່ອງເຫັນເນ້ືອໜັງຂອງລາວຕາມຮູຂາດຢູ່ທ່ວງໜ້າອົກເສ້ືອຂອງລາວ ແຕ່ອາກາດໜາວທ່ັງທ່ີມະຕົກ ບໍ່ໄດ້ເຮັດໃຫ້ລາວສັ່ນສະທ້ານແຕ່ຢ່າງໃດ ສຳລັບລາວ ຮູ້ສຶກພຽງເຢັນໆເທົ່ານັ້ນ.

ເພາະອາຫານທ່ີລາວໄດ້ກິນເຂ້ົາໄປຢ່າງຫລວງຫລາຍ ພາຍມາກນ້ັນພາໃຫ້ລາວມີຄວາມອົບອຸ່ນ ນັ້ນເປັນອາຫານທ່ີລາວ ສົມມຸດວ່າເປັນໄກ່ງວງ ແລະອາຫານອ່ືນໆ ໃນໂລກນ້ີໄດ້ມາໂຮມຢູ່ ໃນອາຫານຄາບມ້ືຂອງລາວໝົດ.

ດ່ັງນ້ັນ ລາວຈ່ຶງມານ່ັງຫັນໃຈຫ່ອຍຢູ່ນ້ີ ຍ້ອນກິນເຂ້ົາໄປເຫລືອຂ້ອຍເຂດ, ແລ້ວຫລຽວເບ່ິງໂລກຢ່າງບໍ່ມີຄວາມໝາຍ ຄ່ືວ່າໂລກນ້ີບໍ່ມີເມ ອຈະອ່ຳນອຍໃຫ້ລາວໄດ້ຮັບຫຍັງອີກແລ້ວ ນອກເໜ່ືອຈາກນ້ີໄປ.

ລາວບໍ່ຄິດບໍ່ຝັນຈັກເມ ວ່າ ຈະໄດ້ຮັປທານເຂ້ົາຄາບນ້ີ.

ລາວໄດ້ຍ່າງກາຍ ເຮ່ືອນໃຫ່ຍ ຫລັງນ່ຶງ ທ່ີຢູ່ໃກ້ກັບຕ້ົນຄຸນນ ຫລວງສາຍກ້ວ້າງໃຫ່ຍເສ້ັນນ່ຶງ ທ່ີເອ້ີນ ວ່າ ຫ້ນທາງຫລວງເສ້ັນທ່ີ ๕ ນ້ັນເປ້ັນ ເຮ່ືອນຂອງສຸພາບສະຕ່ີຊະລາສອງຄົນ ຂອງຄອບຄົວເກ່ົາເຕ່ົ

ຄອບຄົວນຶ່ງ ສຸພາບສະຕີອຸລາສອງຄົນນີ້ ມີຍົນຊົມຊອບນຳປະເພນີ ອັນເກົ່າເຕ່ທລາຍທີ່ສຸດ ແລະມີທລາຍອັນທລາຍເໝ ທີ່ຂະເຈົ້ານັກເຮັດ ນັກທຳ ຄືຕອນທ່ຽງຂອງມື້ເທງສກີວີງ ຂະເຈົ້າເຄີຍສັ່ງຄົນໃຊ້ຂອງຂະ ເຈົ້າໃຫ້ໄປຍືມລັດຢູ່ປະຕູບ້ານ ຄັນເຫັນຄົນທຸຍາກຍ່າງກາຍໜ້າບ້ານ ມາໃຫ້ພາເຂົ້າເຈົ້າເຂົ້າມາໃນເຮືອນ ແລ້ວແຕ່ງພາເຂົ້າພານ້ຳໃຫ້ກິນ ຈົນວ່າເຂົ້າເຈົ້າກິນໄປບໍ່ໄຫວ ສຕັບຟີພິດ ຊຶ່ງກຳລັງຈະໄປສອນສາທາ ຣະນະ ບັງເອີນຍ່າງຜ່ານມາທາງນັ້ນ ພໍຄົນໃຊ້ຜູ້ນັ້ນເຫັນກໍເຊີນລາວ ເຂົ້າໄປຮັປທານອາຫານຢູ່ໃນບ້ານຕາມປະເພນີທີ່ເຄີຍເຮັດມາ.

ສຕັບພິດນັ່ງຢູ່ໃນສອນ ທລຽວເບິ່ງທາງເບື້ອງໜ້າລາວປະມານ ສິບນາທີ ແລ້ວ ລາວຈຶ່ງຄ່ອຍພຍາຍາມປົ່ນໜ້າ ໄປເບິ່ງທາງໃໝ ດ້ວຍ ຄວາມຍາກລຳ ພໍລາວປົ່ນມາເບິ່ງທາງກ້ຳຊ້າຍ ໜ່ວຍຕາຂອງລາວກໍ ເບີກກ້ວາງຂຶ້ນຢ່າງກະທັນທັນ ຈົນຫົວໃຈລາວຢຸດເຕັ້ນໄປຊົ່ວຂະນະນຶ່ງ ທ້ງຕົນຂອງລາວທີ່ໜ້ຫຸ້ມດ້ວຍເກີບຄູ່ເກົ່າເກົ່າທ້ງຂາດ ກໍຄ້ດຄ້ີນໄປມາ ຢ່າງບໍ່ຮູ້ສຶກຕົວ.

ການທີ່ລາວມີສະພາບເຊັ່ນນີ້ກ້ຍອນວ່າລາວເຫັນສຸພາບບຸຣຸດອຸ ລາຄົນນຶ່ງຂ້ານໜ້ານທາງຫລວງເສັ້ນທີ ๔ ຍ່າງມາທາງບ່ອນລາວນັ່ງຢູ່.

ໃນລະຫ່ວ່າງເກົ້າປີມານີ້ ທຸກມື້ເທງສກີວີງປີໃດ ສຸພາບບຸຣຸດ ອຸລາຄົນນີ້ ກໍໄດ້ມາພົບສຕັບຟີພິດຢູ່ບ່ອນນັ່ງບ່ອນເກົ່າ ຂອງລາວທຸກ ເທ່ື. ນີ້ຄືສິ່ງທີ່ສຸພາບບຸຣຸດອຸລາຄົນນີ້ພຍາຍາມເຮັດໃຫ້ມັນເປັນປະ ເພນີ ຄື ເກົ້າປີດີໆ ເມ່ືຣຣດມື້ເທງສກີວີງປີໃດ ລາວຈະມາພົບກັບ ສຕັບຟີພິດ ແລ້ວພາສຕັບຟີພິດໄປຮ້ານອາຫານແຫ່ງນຶ່ງແລ້ວກໍນັ່ງເບິ່ງ ສຕັບຟີກິນອາຫານຢ່າງແຊບຢ່າງນ້ອ ຜູ້ຄົນໃນປະເທດອັງກິດ ໄດ້ປະ

ຕິບັດສິ່ງເຫລົ່ານີ້ມາໄດ້ຢ່າງສດວກສະບາຍ ໂດຍບໍ່ຄິດຫຍັງພິດ ເຮັດ
ແລ້ວກໍ່ແລ້ວໄປ.

ແຕ່ຢູ່ໃນປະເທດທີ່ເກີດໃໝ່ໃຫ່ຍລຸມ ເຊັ່ນອະເມຣິການີ້ ພວກ
ເຮົາຕ້ອງໄດ້ຄິດກ່ຽວກັບສິ່ງທີ່ພວກເຮົາເຮັດໄປ ເພື່ອຢາກໃຫ້ມັນເປັນ
ປະເພນີຂຶ້ນມາ ພວກເຮົາຕ້ອງໄດ້ເຮັດເໝືອເກົ່າ ເຮັດແລ້ວເຮັດອີກ
ຫລາຍເທື່ອຕໍ່ຫລາຍທີໃຫ້ມັນຄົງໆໄປ ເຊັ່ນສຸພາບບຸຣຸດຊະລາຄົນນີ້ ຮັກ
ປະເທດຊາດບ້ານເມືອງຂອງຕົນຫລາຍ .ເລີຍຄິດວ່າສິ່ງທີ່ລາວໄດ້ເຮັດ
ໄປນັ້ນ ກໍຄືລາວໄດ້ຊ່ວຍສ້າງປະເພນີອັນຍິ່ງໃຫ່ຍຂອງອະເມຣິກັນຂຶ້ນ
ລາວກໍ່ເຮັດໄດ້ເໝາະສົມດີ ເກົ່າປີທີ່ລາວປະຕິບັດມາບໍ່ໄດ້ຂາດຈັກປີ ກໍ
ນັບວ່າຄົບຫ້ວນພໍສົມຄວນ.

ສຸພາບບຸຣຸດຊະລາຄົນນີ້ ໄດ້ສ້າງປະເພນີໄປຢ່າງໝັ້ນຄົງ ແລະ
ດ້ວຍຄວາມພາກພູມໃຈນໍາສິ່ງທີ່ລາວກໍາລັງເຮັດກໍາລັງທໍາ ທີ່ຈິງການ
ລ້ຽງສັດພືດປີລະເທື່ອໃຫ້ອີ່ມໜໍາສໍາຣານ ກໍ່ແມ່ນປະເພນີອັນສໍາຄັນ
ພໍເທົ່າໃດດອກ ເພາະຢູ່ປະເທດອັງກິດຍັງມີປະເພນີສໍາຄັນຫລາຍກວ່ານີ້ ແຕ່ປະເພນີທີ່ສຸພາບບຸຣຸດຊະລາພຍາຍາມສ້າງນີ້ ເປັນແຕ່ພຽງການ
ເລີ່ມຕົ້ນ ເພື່ອສະແດງໃຫ້ເຫັນວ່າ ປະເພນີດັ່ງກ່າວຢູ່ອະເມຣິກາກໍ່ສາ
ມາດເປັນປະເພນີໄດ້ຄືກັນ.

ສຸພາບບຸຣຸດຊະລາຄົນນີ້ເປັນຄົນຈ່ອຍໆ ອາຍຸປະມານຫົກສິບປີ
ເຄື່ອງນຸ່ງຫົ່ມລາວເປັນສີດໍາລ້ວນ ລາວໃສ່ແວ່ນຕາ ຜົມລາວຂາວແລະ
ບາງຫລາຍກວ່າປີທີ່ຜ່ານມາ ແຂ້ງຂາຂອງລາວກໍ່ປາກົດວ່າບໍ່ແຂງແຮງ
ຄືແຕ່ກ່ອນ.

ເມື່ອສັບຟືເຫັນສຸພາບບຸຣຸດຊະລາຄົນນີ້ ຍ່າງເຂົ້າມາຫາລາວ

ลาวกໍເລີ່ມມີອາການສັ່ນສາຍ ແລະການຫັນໃຈ ກໍສັ່ນເຂົ້າຢ່າງບໍ່ທ້ອ ທ້ອງ ລາວຄິດວ່າ ລາວຢາກບິນໜີໄປໄກໆໃຫ້ໄດ້ ແຕ່ກໍບໍ່ເປັນດັ່ງປາ ຖນາ ເພາະເວລານີ້ລາວເໜັງຕີງກໍບໍ່ໄຫວຢູ່ແລ້ວ.

"ສບາຍດີ" ສຸພາບບຸຣຸດຊະລາຄົນນີ້ເວົ້າ "ຈັ່ງເມ່ນຂ້ອຍດີ ໃຈ ທີ່ອີກປີນຶ່ງຜ່ານໄປບໍ່ໄດ້ມີພັຍອັນຕລາຍໃດໆ ບັງຍຣດເຈົ້າ ເຈົ້າ ຍັງມີສຸຂພາບສົມບູນດີ ເຫາະເຫີນເດີນອິ້ນໂລກອັນສວຍງາມນີ້ໄດ້ຢູ່. ເພື່ອຂອບໃຈນຳດິນຟ້າອາກາດ ທີ່ໄດ້ອຳນວຍພອນໃຫ້ເຈົ້າມີສຂພາບດີ ຢ່າງນີ້ ເຈົ້າແລະຂ້ອຍພາກັນໄປລ້ຽງສລອງຂອບໃຈ ໃນມື້ເໜາສກີວິງ ນີ້ກັນເຫາະ ຄັນເຈົ້າຫາກໄປກັບຂ້ອຍ ເພື່ອນເອີ້ຍ ຂ້ອຍຈະລ້ຽງ ໃຫ້ ເຈົ້າເຫລືອເກືອໃຫ້ເຈົ້າອົ່ມ ຊຶ່ງເຊື່ອເມ່ວ່າມັນຈະເຮັດໃຫ້ຮ່າງ ກາຍ ຂອງເຈົ້າສົມບູນຕາມຄວາມປະສົງຂອງເຈົ້າ".

ປະໂຍກເມ່ວດຽວກັນນີ້ລະ ທີ່ສຸພາບບຸຣຸດຊະລາຄົນນີ້ໄດ້ກ່າວ ກັບລາວທຸກເທື່ອໃນມື້ເໜາສກີວິງ ຕລອດຣະຍະເກົ້າປີທີ່ຜ່ານມາ ມັນ ເກືອບເປັນປະເພນີກ່ວ່າໄດ້ ແຕ່ໜ່ອມເມື່ອລາວເວົ້າປະໂຍກນີ້ ມັນ ປຽບເໝືອນວ່າຫູຂອງສັບຟີໄດ້ຍິນສຽງດົນຕຣີອັນອອນຊອນ ແຕ່ເວລາ ນີ້ ລາວເງີຍໜ້າເບິ່ງສຸພາບບຸຣຸດຊະລາຄົນນີ້ ດ້ວຍຢາດນ້ຳຕາ ແລະ ແວວຕາອັນໂສກເສົ້າເທົ່ານ້ັນ ໃຫ້ໜ້າຂອງລາວຮ້ອນປານໄຟ ເມື່ອ ທິມະຕິນາຄືກໜ້າລາວກໍເຊືອນເປັນນ້ຳໃນທັນທີທັນໃດ ກົງກັນ ຂ້ານ ກັບສຸພາບບຸຣຸດຊະລາຄົນນັ້ນ ຊຶ່ງຢືນສັ່ນສາຍດ້ວຍຄວາມໜາວ ລາວຢືນ ໜ້ໜ້ລ້ງໃຫ້ກັບດ້ານລົມພັດມາ ດັ່ງນັ້ນລາວຈຶ່ງບໍ່ເຫັນແສງຕາຂອງສັບ ຟີ.

ສັບຟີບໍ່ເຂົ້າໃຈວ່າ ເປັນຫຍັງສຸພາບບຸຣຸດຊະລາຄົນນີ້ ເວົ້າ

ຢ່າງຫງອຍເຫງົ້າແທ້ ຖ້າລາວອ່ານຄວາມຄິດ ຂອງສຸພາບບຸຣຸດຄົນນີ້ ອອກ ລາວກໍຈະຮູ້ໄດ້ວ່າ ສຸພາບບຸຣຸດຄົນນີ້ ປາຖນາຢາກມີລູກຊາຍຈັກ ຄົນນຶ່ງ ເພື່ອຈະໄດ້ມາພິທັບສັບຟີຢູ່ນີ້ແທນລາວ ເມື່ອລາວລົ້ມຫາຍ ຕາຍຈາກໄປແລ້ວ ແລະລູກຊາຍຂອງລາວກໍຈະໄດ້ເວົ້າວ່າ: "ເພື່ອ ຣະລຶກເຖິງວິນຍານຂອງພໍ່ຂອຍ" ມັນຕ້ອງເປັນແບບນີ້ມັນຈຶ່ງຈະເປັນ ປະເພນີໄດ້ຢ່າງສົມບູນຕາມລາວຄິດ.

ແຕ່ກໍໜ້າເສົ້າສລົດໃຈ ທີ່ສຸພາບບຸຣຸດຄົນນີ້ບໍ່ມີຄອບຄົວເລີຍ.

ລາວອາໄສຢູ່ຫ້ອງເຮືອນເກົ່າເດ່ຫລັງນຶ່ງທີ່ຢູ່ໃກ້ກັບສວນແຫ່ງນີ້ ຍາມຣະດູໜາວ ລາວປູກຕົ້ນດອກໄມ້ແດ່ເລັກນ້ອຍ ຍາມຣະດູໃບໄມ້ປົ່ງ ລາວຍ່າງຫລົ້ນຕາມຫົນທາງຫລວງເສັ້ນທີ່ສີ່ ຍາມຣະດູຮ້ອນລາວອອກ ໄປຢູ່ນາ ທີ່ຢູ່ບ່ອນດິນເນີນສູງ ນອກເມືອງນິວຢອກ ແລະເວົ້າກ່ຽວກັບ ເຜ່ງໄມ້ແປກປະລາດຊະນິດນຶ່ງ ຊຶ່ງລາວຫວັງວ່າ ໃນວັນນຶ່ງລາວຈະ ຊອກຫາມັນໃຫ້ໄດ້ ຍາມຣະດູໃບໄມ້ຫລົ່ນ ລາວລົ້ງເຂົ້າສັບຟີ ນີ້ ລະຄືສິ່ງທີ່ສຸພາບບຸຣຸດຊະລາຄົນນີ້ໄດ້ປະຕິບັດມາໃນຊີວິດຂອງລາວ.

ສັບຟີພິດເງີຍໜ້າເບິ່ງລາວເຄິ່ງນາທີ ຢ່າງມິດຫວັງ ແລະສົງ ສານຕົນເອງ ແສງຕາຂອງສຸພາບບຸຣຸດແຈ່ມໃສດ້ວຍຄວາມພໍໃຈ ໃບ ໜ້າຂອງລາວເບີ່ງເຄົ້າລົງນຳທຸກປີ ແຕ່ເຄື່ອງນຸ່ງຫົ່ມຂອງລາວກ້ຽງສະ ອາດແລະໃໝ່ຈຽມ.

ຕໍ່ມາສັບຟີກໍທຳທ່າເຣັດສຽງແມວໃດເຜ່ນຶ່ງຈາກຮູຄໍ ຄວາມ ຈິງແລ້ວແມ່ນລາວພະຍາຍາມຈະເວົ້າ ມັນເປັນສຽງດຽວທີ່ສຸພາບບຸຣຸດ ຊະລາຄົນນີ້ໄດ້ຍິນເກົ້າເທື່ອມາແລ້ວ ທັງເຂົ້າໃຈນຳສຽງນັ້ນດີ ແລະຮູ້ ວ່າສັບຟີຮັບຄຳເຊີນຂອງລາວດ້ວຍ.

"ຂອບໃຈ ຂ້ອຍຫິວຫິວ".

ສັບຟີອຶ່ມໜ້າຍ ແຕ່ລາວເຂົ້າໃຈດີ່ວ່າ ລາວເປັນ ສ່ວນປະກອບຂອງປະເພນີ ບໍ່ແມ່ນລາວເອງ ທີ່ຕ້ອງການອາຫານໃນມື້ແຫ່ງສະກີວິງ ມັນເປັນຄວາມປາຖນາຂອງສຸພາບບຸຣຸດມື້ຕ່າງຫາກ ແມ່ນຢູ່ທີ່ວ່າຢູ່ໃນອະເມຣິກາມີສິດເສຣີພາບ ແຕ່ກໍມີບາງວັນທີ່ຈຳເປັນຕ້ອງໄດ້ເຮັດສິ່ງທີ່ຕົນບໍ່ຢາກເຮັດ.

ສຸພາບບຸຣຸດຊະລາຄົນມື້ພາສັບຟີເຂົ້າໄປໃນຮ້ານອາຫານແລະໄປນັ່ງຢູ່ໂຕະໜ່ວຍທີ່ຊະເຈົ້າເຄີຍນັ່ງມາ ພວກຢູ່ໃນຮ້ານຮູ້ຈັກຊະເຈົ້າດີ

"ເຖົ້ານັ້ນມາອີກແລ້ວ" ຄົນຮັບໃຊ້ຜູ້ນຶ່ງເວົ້າຂຶ້ນ "ເຖົ້າທີ່ຊື້ອາຫານໃຫ້ໝູ່ກິນໃນມື້ເໜ່ງສກີວິງທຸກປີ້ນັ້ນນາ".

ສຸພາບບຸຣຸດຊະລານັ່ງເບິ່ງຄົນຮັບໃຊ້ທຽວຄົ້ນເອົາເຄື່ອງກິນມາຕັ້ງເທິງໂຕະ ແລ້ວສັບຟີກໍເລີ່ມນັ່ງກິນເອົາກິນເອົາ ບໍ່ພໍ່ຄາວ ຊີ້ນໄກ່ງວງແລະອາຫານອື່ນໆຢ່າງຫລວງຫລາຍພາຍມາກໍ່ໝົດກ້ຽງ ສັບຟີເຫັນໃບໜ້າຂອງສຸພາບບຸຣຸດຊະລາມີ້ຍາມດ້ວຍຄວາມຊຶ່ມຊື່ນຍິນດີ ລາວກໍກິນຕໍ່ໄປເພື່ອເຮັດໃຫ້ສຸພາບບຸຣຸດຊະລາມີ້ດີໃຈ.

ປະມານຊົ່ວໂມງຕໍ່ມາ ສັບຟີກໍຖອຍທັບ.

"ຂອບໃຈ" ສັບຟີເວົ້າ "ຂອບໃຈສຳລັບອາຫານແຫ່ງສກີວິງຄາບນີ້".

ເວົ້າແລ້ວ ລາວກໍຢືນຂຶ້ນດ້ວຍຄວາມຍາກຊຸ ແລະເລີ່ມຈະຍ່າງອອກໄປຜິດທາງ ຄົນຮັບໃຊ້ຜູ້ນຶ່ງ ຈຶ່ງພາລາວຍ່າງໄປບ່ອນທາງອອກ.

ສຸພາບບຸຣຸດຊະລາຄົນນັ້ນ ນັບເງິນຈຳນວນນຶ່ງດອລລາກັບມ

ເຊັ່ນຈ່າຍໃຫ້ຄ່າເຄື່ອງກິນຢ່າງຣະມັດຣະວັງ ແລະປະຫ້າສິບເຊັ່ນໄວ້ເທິງໂຕ໊ະໃຫ້ຄົນຮັບໃຊ້.

ຽກຈາກປະຕູມາ ຂະເຈົ້າບອກລາກັນດັ່ງທີ່ເຄີຍມາທຸກປີ ສຸພາບບຸຣຸດຊະລາຍ່າງໄປທາງໃຕ້ ເລະສຕັບຟີຍ່າງເມືອທາງເໜືອ.

ສຕັບຟີຍ່າງຫວິດເຈທາງໄປໄດ້ນ້ອຍນຶ່ງ ກໍຢຸດຢືນຊ້ອນມາທີ່ນຶ່ງ ກໍເລີຍລົ້ມຟາດລົງ.

ມີຄົນມາພົບເຫັນລາວລົ້ມຟຸບຢູ່ຫັ້ນ ແລ້ວນຳລາວໄປສົ່ງໂຮງໝໍ ພວກໝໍເອົາລາວນອນຢຽດລົງເທິງຕຽງ ແລ້ວເລີ່ມກວດເບິ່ງວ່າ ເປັນຫຍັງລາວຈຶ່ງລົ້ມ.

ຊ້ອໂມງນຶ່ງຕໍ່ມາ ສຸພາບບຸຣຸດຊະລາຄົນນັ້ນ ກໍຖືກຫາມເຂົ້າມານອນໂຮງໝໍ່ນອນດຽວກັນກັບສຕັບຟີ ພວກໝໍເອົາລາວນອນລົງເທິງຕຽງນຶ່ງອີກ ແລ້ວກວດເບິ່ງວ່າລາວເປັນພຍາດຫຍັງ.

ນ້ອຍນຶ່ງຕໍ່ມາ ພວກທ່ານໝໍໄດ້ພົບກັບທ່ານໝໍນຶ່ງອີກ ຂະເຈົ້າລົມກັນວ່າ:

"ສຸພາບບຸຣຸດຊະລາໜ້າຕາດີຄົນນັ້ນ" ທ່ານໝໍນຶ່ງເວົ້າ

"ເຈົ້າຮູ້ຈັກບໍ່ວ່າລາວເປັນຫຍັງ? ລາວເກືອບຕາຍ ອຶດເຂົ້າຂ້ອຍຄິດວ່າ ລາວເປັນຄົນທະນົງຕົວ" ທ່ານໝໍຄົນນັ້ນເວົ້າ "ລາວບອກຂ້ອຍວ່າ ລາວບໍ່ໄດ້ກິນຫຍັງມາໄດ້ສາມມື້ແລ້ວ"●

ใบไม้ใบสุดท้าย

ມີຄົນຫົ່ມທາງເສັ້ນນຶ່ງ ທີ່ສັບສົນກັນຫລາຍທີ່ສຸດຢູ່ໃນຄຸ້ມນ້ອຍໆ ແຫ່ງນຶ່ງ ທີ່ຢູ່ຕິດກັບທາງຕາເວັນຕົກຂອງວໍຊິງຕັນສເຕາຣ໌ ໃນມະຄອນ ນິວຢອກ ມັນສອນກັນໄປທົ່ວທຸກທິດທຸກທາງ ແລະຕັດກັນໃຫ້ເປັນຕ່ອນ ເລັກຕ່ອນນ້ອຍຊຶ່ງເອີ້ນວ່າ "ດອນ" ຫົນທາງເສັ້ນນຶ່ງໄວ້ງໄປ ໂງ ມາ ຕັດສາຍດຽວກັນຕັ້ງບ່ອນສອງບ່ອນ ຈ່າງແຕ້ມຮູບຄົນນຶ່ງຄົນພິບ ແລ້ວວ່າ ຫົນທາງເສັ້ນນີ້ມີຄຸນຄ່າບໍ່ໜ້ອຍ ສົມມຸດວ່າຈ່າງແຕ້ມຮູບຄົນນຶ່ງ ເອົາເຄື່ອງແຕ້ມຮູບມາ ທັ້ງທີ່ລາວຍັງບໍ່ທັນໄດ້ຈ່າຍເງິນ ສົມມຸດວ່າ ລາວບໍ່ມີເງິນ ແລະສົມມຸດວ່າມີຊາຍຄົນນຶ່ງຈະມາເອົາເງິນ ຍ່າງຕາມ ທາງເສັ້ນນັ້ນມາ ແລະບຶດນຶ່ງລາວສັງເກດວ່າລາວໄດ້ກັບມາຮອດບ່ອນ ເກົ່າຄືນໂດຍບໍ່ໄດ້ຮັບເງິນພໍແປ.

ຄຸ້ມນີ້ເອີ້ນວ່າບ້ານກຣີນວິຊ ແລະຢູ່ບ້ານກຣີນວິຊນີ້ລະ ທີ່ພວກ ຈ່າງແຕ້ມຮູບນັກພາກັນມາພັກເຊົາຢູ່ ເພາະຢູ່ນີ້ ມີທ້ອງໃຫ້ເຊົ່າທີ່ຂະ

ເຈົ້າພໍໃຈ ໄຟກໍສ່ວ່າງແລະຄ່ຳເຂົ້ານໍ້ຖືກ.

ຊູ ແລະ ຈອນສີ ພາກັນອາໄສຢູ່ຊັ້ນເທິງຂອງເຮືອນສາມຊັ້ນ ຫລັງນຶ່ງ ນຶ່ງໃນສອງສາວນີ້ເປັນຄົນມາຈາກຣັດເມນ ແລະອີກຜູ້ນຶ່ງມາຈາກຣັດຄາລີຟໍເນັຍ ເຂົາເຈົ້າໄດ້ພົບກັນຢູ່ຮ້ານອາຫານແຫ່ງນຶ່ງຢູ່ຫົນທາງສາຍທີແປດ ເວລາຢູ່ໃນຮ້ານອາຫານນັ້ນ ເຂົາເຈົ້າມາສັງເກດເຫັນວ່າ ເຂົາເຈົ້າມີຣົດນິຍົມໃນສິລປະແຍບດຽວກັນ ອາຫານຣົດດຽວກັນ ແລະເຄື່ອງນຸ່ງຫົ່ມຊະນິດດຽວກັນ ດັ່ງນັ້ນເຂົາເຈົ້າຈຶ່ງຕົກລົງປ່ຽໃຈມາຢູ່ນຳກັນແລະເຮັດວຽກຊ່ວຍກັນ.

ຣະຍະນີ້ແມ່ນຍາມຣະດູໃບໄມ້ປົ່ງ.

ເມື່ອໃກ້ຮອດຣະດູໜາວ ມີຊາຍແປກໜ້າຄົນນຶ່ງ ເຂົ້າມາໃນບ້ານກຣີນວິຊ ຕອນນັ້ນບໍ່ມີໃຜເຫັນລາວ ລາວຍ່າງເລາະໄປເອົາມີເຢັນຄີນຳ້ກ້ອນຂອງລາວໄປຈັບຜູ້ນັ້ນນຍາຍຜູ້ນີ້ຕໍ່ໄປ.

ລາວເປັນພຍາດອັນຮ້າຍແຮງຊະນິດນຶ່ງ ຊຶ່ງພວກທ່ານໝໍເອີ້ນວ່າເນີໂມເນັຍ ຫລືປອດໄຂ່ ເມື່ອເວລາລາວຢູ່ທາງພາກຕະເວັນອອກຂອງເມືອງນັ້ນ ລາວເດີນໄປມາໄດ້ຢ່າງວ່ອງໄວ ຈັບຍາຜູ້ຄົນເຈັບລະເມືອກັນໄປ ແຕ່ບາດລາວເຂົ້າມາບ້ານກຣີນວິຊນີ້ ຫົນທາງພັດຢາກແຄບແມ່ ລາວຈະເດີນໄປມາຢ່າງວ່ອງໄວກໍບໍ່ໄດ້.

ເຖົ້າເນີໂມເນັຍບໍ່ເປັນເຖົ້າສຸພາບປານໃດ ສຸພາບບຸຣຸດທີ່ດີຈະບໍ່ເຮັດໃຫ້ຜູ້ຍິງທີ່ບໍ່ເຂັ້ງແຮງມາຈາກຄາລີຟໍເນັຍຄົນນີ້ເຈັບ ແຕ່ເຖົ້າເນີໂມເນັຍເອົາມີເຢັນຄີພາກເຫັບຂອງລາວ ຕ້ອງຄ້ຽວຈອນສີຈອນສີເລັຍນອນເລື່ອຢູ່ເທິງຕຽງຂອງລາວເກືອບຢາກວ່າຢ່າງບໍ່ເພັ່ງບໍ່ຕິງ ລາວນອນເລື່ອສອງປ່ອງຢ້ຽມອອກໄປເບິ່ງຝາເຮືອນ ທີ່ຢູ່ຖັດກັບຫລັງທີ່ລາວ

ຢູ່ຫັ້ນຢ່າງບໍ່ວາງຕາ.

ເຊົ້າມື້ນີ້ ທ່ານໝໍຢືນລົມກັບນາງຢູ່ຕາມລຳພັງຢູ່ລະບຽງ ຈົ່ງ ຈອມສີບໍ່ໄດ້ຍິນ.

"ລາວມີຫວັງນ້ອຍຫລາຍທີ່ສຸດ" ທ່ານໝໍເວົ້າ "ລາວມີຫວັງ ຢູ່ ຄັນຫາກ່ວາລາວຍັງຢາກມີຊີວິດຢູ່. ຄັນໃຜບໍ່ຢາກມີຊີວິດຢູ່ນີ້ ຂ້ອຍກໍ ຊ່ວຍເຫລືອຫຍັງບໍ່ໄດ້ ເພື່ອນຍິງຂອງເຈົ້າຕົກລົງໃຈແລ້ວວ່າ ລາວບໍ່ ຢາກດີຂຶ້ນ ລາວມີຄວາມຊຸ້ນຂອງໜອງໃຈແນວໃດແໝ່ນີ້ບໍ?"

"ຍາມໃດລາວກໍຢາກແຕ່ໄປປະເທດອິຕາລີ ໄປແຕ້ມຮູບຮ່ວາວ ເນເປີຣ໋" ຊູເວົ້າ.

"ແຕ້ມຮູບ! ບໍ່ແມ່ນແຕ້ມຮູບດອກຕິ ບໍ່ແມ່ນມີແນວໃດແໝ່ນີ້ ສຳຄັນກ່ອນນີ້ບໍ? ກ່ຽວກັບອ້າຍບາວຕີ?"

"ອ້າຍບ່າວຫຍັງ" ຊູເວົ້າ "ອ້າຍບ່າວສຳຄັນບໍ? ບໍ່ດອກ ທ່ານໝໍ ບໍ່ແມ່ນເຣື່ອງອ້າຍບ່າວດອກ".

"ມັນແມ່ນຈຸດອ່ອນອັນນຶ່ງ" ທ່ານໝໍເວົ້າ "ຂ້ອຍຈະປົວເທົ່າ ທີ່ຂ້ອຍສາມາດຈະປົວໄດ້ ແຕ່ເມື່ອຄົນເຈັບຮູ້ສຶກຕົນວ່າຈະຕາຍ ຂ້ອຍ ນີ້ກໍບໍ່ມີຄຳພາຍຫຍັງໝົດ ໃຫ້ເຈົ້າຊ່ວນລາວ ລົມກັບລາວກ່ຽວກັບເຄື່ອງ ນຸ່ງຫົ່ມໃໝ່ສຳລັບຍາມໜາວເບິ້ງດຸ ຄົນລາວຍັງສົນໃຈ ນຳ້ຈະນາຄົດ ລາວກໍມີຫວັງດີຂຶ້ນກ່ອນນີ້"

ຫລັງຈາກທ່ານໝໍໄປແລ້ວ ຊູກໍເຂົ້າໄປນັ່ງໃຫ້ຜູ້ດຽວຢູ່ຫ້ອງເຮັດ ການ ກ່ອນຈະຍ່າງເຂົ້າໄປໃນຫ້ອງຂອງຈອມສີ ລາວຫ່ວງເວົ້າເຄື່ອງ ແຕ້ມຮູບເຂົ້າໄປນຳທັ້ງຮ່ວງລຳທຳເພັ້ງ.

ຈອມສີນອນແອ້ແລ້ຢູ່ຫັ້ນ ທັ້ງຈ່ອຍແລະບໍ່ເພັ້ງບໍ່ຕົ້ງ ລາວນອນ

ປິ່ນໜ້າໄປທາງປ່ອງຢ້ຽມ ຊູຢຸດຮ້ອງເພັ່ງ ເພາະຄິດວ່າຈອມສິນອມ
ຫລັບ.

ລາວເລີຍນັ່ງລົງເຮັດວຽກ ເມື່ອລາວເຮັດວຽກໄປ ລາວໄດ້
ຍິນສຽງດັງຄ່ອຍໆຫລາຍເທື່ອຕໍ່ຫລາຍທີ ລາວກໍຟ້າວຍ່າງໄປຂ້າງຕຽງ
ນອນ.

ຈອມສິນິດຕາມັ່ງກ້ຽ ເໝນອອກໄປທາງປ່ອງຢ້ຽມ ເລະນັບຄືນ
ຫລັງ.

"ສິບສອງ" ລາວນັບ ເລະນ້ອຍນຶ່ງຕໍ່ມາ - "ສິບເອັດ"-
ຕໍ່ມາ "ສິບ" - "ເກົ້າ" - "ແປດ" -"ເຈັດ" ເກືອບພ້ອມໆກັນ

ຊູເໝນອອກໄປທາງນອກປ່ອງຢ້ຽມເພື່ອຢາກຮູ້ຈັກວ່າຈອມສິນັບ
ຫຍັງຢູ່ນັ້ນ ຢູ່ໃໜ້າປ່ອງຢ້ຽມນັ້ນເໝນຝາເຮືອນດ້ານຂ້າງຂອງເຮືອນ
ຫລັງຖັດໄປ ຝາດ້ານນີ້ບ່ໍຄ່ອຍມີປ່ອງຢ້ຽມ ແຕ່ມີເຄືອໄມ້ເກ່ົາໆເລືອຂຶ້ນ-
ຕິດກັບຝາເຮືອນ ຍາມນີ້ເປັນຣະດູໜາວ ໃບໄມ້ເກືອບຫລົ່ນປະເຄືອສີ
ດໍາຂອງມັນເກືອບໜົດແລ້ວ.

"ມັນເໝນຫຍັງ ເພື່ອນຮັກ?" ຊູຖາມ

"ຫົວ" ຈອມສິເວົ້າດ້ວຍນ້ໍາສຽງຄ່ອຍໆ "ບາດນີ້ມັນຫລົ່ນໄວ
ເນາະ ສາມມ້ືກ່ອນໜ້ໍາມີເກືອບຮ້ອຍກ່ວາໃບ--ເຮົາມັບມັນຈົນເຈັບຫົວ
ແຕ່ບາດນ້ືມັນບ່ໍາຍແລ້ວ ໃບນຶ່ງຫລົ່ນອີກແລ້ວ--ບາດນ້ືມັນຍັງເຫລືອແຕ່
ຫ້ໍາ"

"ຫ້ໍາຫຍັງ ທ້ືຮັກ? ບອກຊູແດ່ແມ້"

"ໃບໄມ້ຢູ່ເຄືອໄມ້ນັ້ນຫ້ັນມ້ະ ເມ່ືອໃບສຸດທ້ายຫລົ່ນ ເຮົາກໍ່ຈະ
ໄປຄ້ືກັນ ເຮົາຮູ້ສຶກມາໄດ້ສາມມ້ືແລ້ວ ທ່ານໝໍ່ໄດ້ບອກໂຕ້ນ້ັນ?".

"ໂອຍ!! ເຮົາບໍ່ເຄີຍໄດ້ຍິນເຣື່ອງຈັ່ງຊີ້ຈັກເທື່ອ" ຊູເວົ້າ ແມ່ນເຄື່ອໄມ້ເຫົ່ານັ້ນມີຄຳພາຍຈັ່ງໃດກັບໂຕເກາະ? ມັນກ່ຽວຫຍັງກັບການເຈັບເປັນຂອງໂຕຮຶ? ແລ້ວໂຕກະເຄີຍຮັກເຄື່ອໄມ້ນັ້ນແທ້ບໍ? ຢ່າຄິດເປັນຮ້າໄປນ໊ະ ທ່ານໝໍເວົ້າໃຫ້ເຮົາຟັງວ່າໂຕມີຫວັງຊີດີຢູ່ດອກ ເພີ້ນຫາກໍບອກເຮົາເດ້ມື້ເຊົ້ານີ້ ເພີ້ນເວົ້າວ່າໂຕມີຫວັງຫລາຍທີ່ສຸດ!! ພຍາຍາມກິນຫຍັງແດ່ຈັກນ່ອຍເນ໊ຕິ ເຮົາຈະກັບຄືນເຮັດວຽກສະກອນ ເຮົາຈະຂາຍຮູບແຕ້ມເພີ້ມນີ້ ແລ້ວເຮົາຈະເອົາເງິນໄປຊື້ຢາງອື່ນມາໃຫ້ໂຕກິນອີກ ເພື່ອໂຕຈະໄດ້ແຂງແຮງໄວ".

"ໂຕຢ່າໄປຊື້ຫຍັງມາໃຫ້ເຮົາກະຢ່າ" ຈອນສີບອກ ທັງຍັງເມີ້ມອອກໄປນອກປ່ອງຢ້ຽມ "ໃບນຶ່ງຫລົ່ນອີກແລ້ວ - ບໍ່, ເຮົາບໍ່ຢາກກິນຫຍັງຜິດດຽວນີ້-ບາດນີ້ມັນຍັງເຫລືອແຕ່ສີ່ ເຮົາຢາກເຫັນໃບສຸດທ້າຍຫລົ່ນກ່ອນມືດມື້ ແລ້ວເຮົາກໍຈະຕາຍໄປກັບມັນ".

"ຈອນສີ ທີ່ຮັກ" ຊູເວົ້າ "ໂຕສັນຍາກັບເຮົາໄດ້ບໍ່ວ່າ ໂຕຈະຫລັບຕາໄວ້ ແລະປະໃຫ້ຕາຂອງໂຕນັ້ນຫລັບຢູ່ຫັ້ນ? ແລະສັນຍາອີກ່ວ່າ ໂຕຊິບໍ່ເບິ່ງອອກໄປນອກປ່ອງຢ້ຽມ ຈົນກວ່າເຮົາຈະແຕ້ມຮູບແລ້ວ? ເຮົາຕ້ອງແຕ້ມຮູບນີ້ໃຫ້ມັນແລ້ວກ່ອນມື້ອື່ນ ແລ້ວເຮົາກໍຕ້ອງການແສງໄຟຟ້ານີ້ ເຮົາຄຸມປ່ອງຢ້ຽມຢູ່ນີ້ບໍ່ໄດ້ດອກ".

"ໂຕໄປແຕ້ມຢູ່ຫ້ອງອື່ນບໍ່ໄດ້ບໍ?" ຈອນສີຖາມຢ່າງບໍ່ເອົາຫົວ ຊາ.

"ເຮົາຢາກຢູ່ກັບໂຕ" ຊູຕອບ "ແລະເຮົາກໍບໍ່ຢາກໃຫ້ໂຕເບິ່ງໃບໄມ້ນັ້ນ".

"ບັດໂຕຫາກແຕ້ມແລ້ວ ບອກເຮົາເນີ" ຈອນສີບອກລາວທັງ

ຫລັບຕາລົງ ແລະນອນງຽບຢ່າງບໍ່ເໜັງບໍ່ຕີງ "ເພາະເຮົາຢາກເຫັນໃບສຸດທ້າຍຫລົ່ນ ເຮົາຈຶ່ງນອນຄອຍຖ້າເບິ່ງດົນສົມຄວນແລ້ວ ແລະເຮົາກໍໄດ້ນອນຄິດນາເຫິງສົມຄວນແລ້ວຄືກັນ ເຮົາມາຢາກເຈີດລົງໄປຄືໃບໄມ້ນັ້ນແທ້ເດ".

"ພຍາຍາມນອນເທາະ" ຊຸບອກ "ເຮົາຕ້ອງໄປເອີ້ນໃຫ້ເຂັ້ມແໝ້ນຂຶ້ນມາເຫິງພີ້ ເພາະເຮົາຢາກໃຫ້ມີຮູບຜູ້ຊາຍຢູ່ໃນຮູບແຕ້ມນີ້ນຳ ແລ້ວເຮົາຢາກໃຫ້ຜູ້ຊາຍໃນຮູບນັ້ນ ຄ້າຍຄືກັນກັບເຂັ້ມແໝ້ນ ເຮົາສົ່ງໄປບຶດດຽວນຶ່ງດອກ ຢ່າຕີ່ງເດີ ໃຫ້ເຮົາກັບມາສະກ່ອນ".

ເຖົ້າເຂັ້ມແໝ້ນ ເປັນຊ່າງແຕ້ມຮູບ ທີ່ເຊົ່າຢູ່ຫ້ອງຊັ້ນລຸ່ມ ອາຍຸລາວໄດ້ຫົກສິບປາຍແລ້ວ ລາວບໍ່ມີຊື່ສຽງໃນການແຕ້ມຮູບເລີຍ ລາວແຕ້ມຮູບມາໄດ້ສີ່ສິບປີດີໆ ແຕ່ແຕ້ມບໍ່ໄດ້ດີຈັກເທື່ອ ລາວເຄີຍເວົ້າວ່າຈະແຕ້ມຮູບອັນຍິ່ງໃຫຍ່ແລະຍອດຢ້ຽມຢູ່ເລື້ອຍໆ ແຕ່ລາວກໍບໍ່ໄດ້ເລີ່ມແຕ້ມຈັກເທື່ອ.

ລາວໄດ້ເງິນເລັກໆນ້ອຍໆຈາກຜູ້ອື່ນຈ້າງລາວໃຫ້ໄປເປັນແບບແຕ້ມຂອງຂະເຈົ້າ ລາວມັກເມົາເຫລົ້າຢູ່ເລື້ອຍໆ ລາວຍັງເວົ້າກ່ຽວກັບຮູບອັນຍອດຢ້ຽມຂອງລາວຢູ່ສເມີ ແລະລາວເຊື່ອວ່າ ມັນເປັນໜ້າທີ່ຂອງລາວທີ່ຈະເຮັດໜ້າທີ່ສິ່ງທຸກໝ່ວ ເພື່ອຊ່ວຍເຫລືອ ຊຸ ແລະຈອນສີ.

ຊຸລົງໄປພົບລາວຢູ່ໃນຫ້ອງມືດຂອງລາວ ຊຸຮູ້ວ່າລາວກິນເຫລົ້າເພາະນາງໄດ້ກິ່ນເຫລົ້າສົ່ງມາໃສ່ດັງ ຊຸເລົ່າເຮື່ອງຈອນສີ ໃຫ້ລາວຟັງແລະໃບໄມ້ຢູ່ເທິງເຄືອໄມ້ນັ້ນ ຊຸເວົ້າວ່າ ລາວຢ່ານຈອນສີຕາຍໄປພ້ອມກັບໃບໄມ້ນັ້ນອີ່ຫລີ ເພາະຄວາມຢາກມີຊີວິດຢູ່ໃນໂລກນີ້ຂອງລາວ

ยังมีน้อยเต้มที.

เถ้าเขมเฌมร้องโรฮื้นด้อยคอามใจร้าย ต่คอามคิดอันนั้น.

"แม่นหยังเภาะ?" ลาอร้อง "คอามคิดบ้าๆเฌอนี้ยังมีอยู่หอะ?" ผู้คิมตายย้อมใบไม้หล่นจากกิกมันเอิ้นเขาะ? ข้อยบ่ได้ยินเรื่องพิสดามแบบนี้จักเที่อ บ่เคียได้ยินเลีย ข้อยสีบ่ไปนั่งเป้นแบบให้เจ้าแต้มดอก เป้นหยังเจ้าจึงปะให้ลาอคิดจั่งอั้นธิ? จอมสิเอ๋ย - จอมสิ จั่งแม่นคิดต่างเพี้นแท้เด้!".

"ลาอเจ็บพ่กับปาหัมใจนี้ละ" ฐูเว้า "คอามเจ็บพาให้ลาอคิดในสิ่งแปกปลาด ท่ามเขมเฌม คันเจ้าบ่ฮื้นเมื่อก่บ่เป้นหยัง แต่ข้อยคิดว่าเจ้าจะบ่สุพาบปามใด".

"ผู้ยิงเป้นแบบนี้ละ!" ลาอร้อง "ใผว่าข้อยสีบ่ฮื้นไปไป๊-ข้อยจะไปกับเจ้า เคิ่งอ่อโมงดีๆที่ข้อยคิดสีเว้าว่า ข้อยจะไป ปัดโทเอ๋ย! มันบ่แม่นบ่อมที่ผู้ยิงที่พาธักย่างจอมสิจะมาบอมเจ็บยู่นี้. มื้ใดมื้หึงข้อยจะแตมธูบอันยอดย้องมฮื้น แล้วพอกเธิาจะพิจาก่บ่อมนี้โลด".

เมื่อเวลาสองคิมนี้ฮื้นไป จอมสิกำลังมอมหลับยู่ ฐูเว้าผ่าไปกั้งบังป่องย้องไว้ และพาเถ้าเขัมเฌมไปส่องเบิ่งเคือไม้มันยู่ป่องย้องในห้องอื้นด้อยคอามย่ามกิว ขาดแล้วเธิาเจ้ากำเบิ่งพากันขึดมึ่งโดยบ่อ่าหยังพ่คอาม คนะนั้นผิมติกลิงมาพ่ยิบๆ มีทังทีมะติกอีก.

เถ้าเขัมเฌมนั่งแปะลิง และฐูกำเลิ่มแต้ม.

ຊຸ້ນັ່ງແຕ້ມເກືອບຕລອດຄືນເລີຍ.

ໃນຕອນເຊົ້າຫລັງຈາກໄດ້ນອນຍິບໄປໄດ້ຊົ່ວໂມງນຶ່ງຊຸກໍຕື່ນຂຶ້ນ ມາ ແລ້ວຍ່າງເຂົ້າໄປຂ້າງຕຽງຂອງຈອນສີ ຈອນສີນອນນິ່ນຕາຢູ່ ຫັງ ຫລຽວໄປທາງປ່ອງຢ້ຽມ "ເຮົາຢາກສ່ອງເບິ່ງປ່ອງຢ້ຽມ" ລາວ ບອກຊຸ.

ຊຸເອົາຜ້າກັ້ງປ່ອງຢ້ຽມອອກ.

ຫລັງຈາກຝົນຕົກລົມແຮງຕລອດຄືນ ກໍຍັງມີໃບໄມ້ໃບນຶ່ງເຫລືອ ຄ້າງຄິດກັບຝາເຮືອນນັ້ນຢູ່ ມັນເປັນໃບສຸດທ້າຍທີ່ເຫລືອຄ້າງຢູ່ ທາງ ກົກມັນຍັງເປັນສີຂຽວແກ່ ແຕ່ປາຍໃບເປັນສີເຫລືອງແລ້ວ ໃບນັ້ນຫ້ອຍ ຢູ່ງ່າຂອງມັນສູງຈາກພື້ນດິນປະມານຊາວຟຶດ.

"ນັ່ນເປັນໃບສຸດທ້າຍ" ຈອນສີເວົ້າ "ເຮົາຄິດວ່າມັນຫລົ່ນ ແຕ່ຄືນນີ້ພຸ້ນ ເພາະເຮົາໄດ້ຍິນຝົນຕົກ ມັນຄືສິຫລົ່ນມື້ນີ້ລະ ແລ້ວ ເຮົາກໍຈະຕາຍໄປນຳມັນ".

"ຈອນສີ ເພື່ອນຮັກ!" ຊຸວ່າ "ຄິດຫາເຮົາແດ່ແມ້ ຄັນໂຕ ບໍ່ຄິດນຳໂຕເອງກໍດີ ເຮົາສິເຮັດເມືອໃດ ຄັນບໍ່ດີໃຕ?"

ແຕ່ຈອນສີບໍ່ຕອບ ສິ່ງທີ່ເປົ່າປ່ຽວທີ່ສຸດໃນໂລກເມື່ອນວິນຍາມ ເມື່ອມັນພ້ອມແລ້ວທີ່ຈະເດີນທາງໄກອອກໄປ ຄວາມຜູກພັນຕໍ່ເພື່ອນ ແລະຕໍ່ໂລກນັ້ນກໍ່ຄ່ອຍຫລຸດລົງໄປເທື່ອລະເລັກເທື່ອລະນ້ອຍ.

ເວລາໄດ້ພັດໄປຢ່າງຊ້າໆ ໃນວັນນັ້ນ ເມື່ອຕາເວັນຕົກດິນ ແລ້ວ ຄວາມມືດກໍ່ຄ່ອຍມືດເຂົ້າ ມືດເຂົ້າ ແຕ່ຂະເຈົ້າຍັງເຫັນໃບໄມ້ ໃບນັ້ນຫ້ອຍຢູ່ງ່າທີ່ເຫລືອຕິດກັບຝານັ້ນຢູ່ຄືເກົ່າ ເມື່ອຕົກກາງຄືນມາລົມ ເລີ່ມພັດອີກ ຝົນຕົກລົງສາດໃສ່ປ່ອງຢ້ຽມຢ່າງໜັກ.

ພໍຕາເວັນຂຶ້ນຂອບຟ້າໃນມື້ໃໝ່ ຈອນສີກໍ່ອະນຸຍາດສ່ອງປ່ອງ ຢ້ຽມອີກ.

ໃບໄມ້ໃບນັ້ນກໍ່ຍັງຢູ່ທັ້ນຄືເກົ່າ.

ຈອນສິນອນສັງເກດເບິ່ງມັນຄົນເຕີບ ແລ້ວກໍ່ຮ້ອງຊຸ ທີ່ກຳລັງ ຫ້າງອາຫານມາໃຫ້ລາວກິນ.

"ຈັ່ງແມ່ນເຮົາບໍ່ດີ ຊຸ" ຈອນສີເວົ້າ "ມີໝວໃດໝວນຶ່ງ ເຮັດໃຫ້ໃບໄມ້ນັ້ນຕິດຢູ່ທັ້ນ ເພື່ອສແດງໃຫ້ເຮົາເຫັນວ່າ ເຮົາຊໍ່ວເຖິງ ຂນາດໃດ ແຕ່ກ່ອນອື່ນເອົາກະຈົກມາໃຫ້ເຮົາແຍງແດ່ ເຮົາຢາກເຫັນ ຕົວເອງ ແລ້ວເຮົາຈະລຸກຂຶ້ນໄປເບິ່ງໂຕຄົວກິນ".

ຊໍ່ວໂມງນຶ່ງຕໍ່ມາ ລາວເວົ້າວ່າ "ຊຸ ມື້ໃດມື້ນຶ່ງເຮົາຫວັງວ່າ ຈະໄດ້ໄປແຕ້ມຮູບອ່າວຂອງໝເປຣິ໋ຊ".

ທ່ານໝໍມາຢ້ຽມເບິ່ງຈອນສີຕອນບ່າຍວັນນັ້ນ ຫລັງຈາກເພື່ອ ກວດແລ້ວ ຊຸຕິດຕາມເພື່ນອອກຈາກຫ້ອງຈອນສີໄປ ເມື່ອຮອດລະບຽງ ຊຸຈຶ່ງຖາມເພື່ນ.

"ຄວາມຫວັງມີຫລາຍທີ່ສຸດ" ທ່ານໝໍເວົ້າ ເພື່ນຈັບມືບອບ ບາງຂອງຊຸມາກຳໄວ້ໃນອ້ຽງມືຂອງເພື່ນ "ປິ່ອຣະບັດລາວໃຫ້ດີ ເດີ ລາວຈະຫາຍເຈັບໄວໆນີ້ແລ້ວ ຂ້ອຍຈະຕ້ອງໄດ້ໄປເບິ່ງຄົນເຈັບອີກຄົນ ນຶ່ງຢູ່ໃນເຮືອນຫລັງນີ້ ລາວຊື່ວ່າເບັນເໝນ ເປັນຄົນແຕ້ມຮູບ ຂ້ອຍຄຶດ ວ່າ ອີກຊໍ່ນຶ່ງຂອງລາວແມ່ນ ເນີໂມເນັຍ ລາວເປັນຄົນຊະລາ ຮ່າງ ກາຍບໍ່ແຂງແຮງແລະເຈັບຫັກ ບໍ່ມີຫວັງສຳລັບລາວ ແຕ່ພວກເຮົາເອົາ ລາວໄປໂຮງໝໍມື້ນີ້ ແລະພວກເຮົາຈະພຍາຍາມຊ່ວຍຊີວິດລາວເທົ່າທີ່-ຈະຊ່ວຍໄດ້".

ມື້ພາມາ ທ່ານໝໍບອກຊູ ວ່າ "ລາວພົ້ນອັນຕລາຍແລ້ວ ຄວາມ
ສາມາດຂອງເຈົ້າ ບາດນີ້ມີແຕ່ເບິ່ງເອົາເຂົ້າເອົານ້ຳໃຫ້ລາວກິນຢ່າງ
ສມຸກສຸກສບາຍ ລາວກໍຈະຫາຍແລ້ວ".

ຕອນບ່າຍຂອງວັນນັ້ນ ຊູຍ່າງເຂົ້າມາຕຽງຂອງຈອນນີ ທີ່ນອນ
ບໍ່ຕິງຢູ່ ຊູກໍເອົາແຂນກອດຮອບແອວລາວດ້ວຍຄວາມຮັກແພງ.

"ເຮົາມີສິ່ງນຶ່ງຈະບອກໂຕ" ຊູເວົ້າ "ທ່ານເປັນແມນຕາຍ
ແລ້ວ ດ້ວຍໂຣກປອດບວມນີ້ນີ້ຢູ່ໂຮງໝໍ ລາວຫາກໍເຈັບໜັກພຽງສອງມື້
ເທົ່ານັ້ນ ມີຄົນເຫັນລາວມື້ທຳອິດໝູບຢູ່ໃນຫ້ອງຂອງລາວດ້ວຍຄວາມ
ເຈັບປວດ.

ເຄື່ອງນຸ່ງຫົ່ມຂອງລາວທັງເກີບປຽກ ແລະເຢັນປານນ້ຳກ້ອນ
ທຸກຄົນຕື່ນວ່າແມນລາວໄປເຮັດຫຍັງຢູ່ໃນ ຍາມຝ່າລົມຝົນຕາດັ່ງນັ້ນ.

"ນອກນັ້ນຂະເຈົ້າຫຍັງເຫັນສິ່ງນຶ່ງອີກ ຄືໂຄມໄຟທີ່ລາວ ໃຊ້
ຈູກໄປນອກເຮືອນ ແລະເຄື່ອງແຕ້ມຮູບຂອງລາວມີນ້ຳສີຂຽວ ແລະ
ເຫລືອງ.

"ສອງປ່ອງຢ້ຽມເບິ່ງແມ້ທີ່ຮັກ ເບິ່ງໃບໄມ້ໃບສຸດທ້າຍທີ່ຕິດ-
ກັບຝານັ້ນນາ ໂຕບໍ່ສົງໃສບໍ່ວ່າ ເປັນຫຍັງມັນບໍ່ເພັ້ງຕິງ ທັງໆທີ່ລົມພັດ
ແຮງປານນັ້ນ? ໂທ! ເພື່ອນເອີຍ, ມັນແມ່ນການແຕ້ມຮູບອັນຍອດ
ຢ້ຽມຂອງເບັ້ນແມນ ລາວຈູກໄປແຕ້ມຮູບໃບໄມ້ນັ້ນໄວ້ຕອນກາງຄືນ
ທີ່ໃບໄມ້ໃບສຸດທ້າຍໄດ້ຫລົ່ນໄປແລ້ວ"●

ທ້ອງເຊົ່າທີ່ມີເຄື່ອງເຮືອນຄົບ

ພວກຜູ້ຄົນທີ່ອາສັຍຢູ່ໃນຈຳພວກເຮືອນເກົ່າແກ່ສີແດງ ຢູ່ທາງ ພາກຕາເວັນຕົກຂອງນິວຢອກ ພາກັນເຄື່ອນຍ້າຍບ່ອນຢູ່ໄປມາບໍ່ເຊົ່າ ຈັກເທື່ອ ເຂົາເຈົ້າພາກັນຍ້າຍໄປຍ້າຍມາຢູ່ບໍ່ໄດ້ຂາດຣະຍະ ປຽບ ເພື່ອນກັນກັບການໝຸນວຽນຂອງວັນແລະເວລາ.

ມີຄົນຫລາຍຮ້ອຍ ຫລາຍແສນ ແລະຫລາຍລ້ານຄົນ ທີ່ບໍ່ມີ ເຮືອນຊານບ້ານຊ່ອງຢູ່ເປັນຂອງຕົນເອງ ດັ່ງນັ້ນ ຂະເຈົ້າຈຶ່ງໄດ້ອາ ສັຍເຮືອນຫລາຍຮ້ອຍຫລັງນີ້ເປັນບ່ອນຢູ່ອໍຄາວ ເຂົາເຈົ້າພາກັນຍ້າຍ ຈາກທ້ອງເຊົ່າບ່ອນນຶ່ງໄປຢູ່ບ່ອນໜ້າເລື້ອຍໆ ຕາມແຕ່ຄວາມພໍໃຈ ເຂົາເຈົ້າເປັນພວກຄົນເລື່ອນລອຍ ປາມຂ້າຕອງເຫລືອງ ບໍ່ຢຸດຢັ້ງຢູ່ ບ່ອນເກົ່າຈັກເທື່ອ ເຄື່ອນຍ້າຍເລື້ອຍໄປ ຂະເຈົ້າບໍ່ເລື່ອນລອຍ ແຕ ສະເພາະທີ່ພັກພາອາສັຍເທົ່ານີ້ ພາກທົ່ວໃຈ ແລະມັນສມອງຂອງຂະ ເຈົ້າກໍເລື່ອນລອຍໄປຕາມໆກັນອີກ. ເຂົາເຈົ້າພາກັນຮ້ອງລຳ ທຳ

ເພັ່ງວ່າ "ເຮືອນເອີຍເຮືອນ ເຮືອນທີ່ໃຫ້ຄວາມອົບອຸ່ນ ແລະຢູ່ເຢັນເປັນສຸກ" ເຂົາເຈົ້າພາກັນຮ້ອງເພັ່ງນີ້ໄປຕາມເຮືອງ ໂດຍບໍ່ມີຄວາມຮູ້ສຶກ ແລະບໍ່ຮູ້ວ່າມັນມີຄຳພາຍຢ່າງໃດ ສິ່ງຂອງເຄື່ອງໃຊ້ເທົ່າທີ່ມີ ຂະເຈົ້າກໍເອົາຍັດໃສ່ກັບເຈ້ຍນ້ອຍໆຫໍ່ໄປນຳກໍຫລາຍພໍແລ້ວ ພວກ ນີ້ ບໍ່ມີຄວາມຮູ້ຫຍັງເລີຍກ່ຽວກັບການເຣັດສວນ ເທົ່າທີ່ຂະເຈົ້າຮູ້ກ່ຽວກັບ ດອກໄມ້ແລະໃບໄມ້ນັ້ນ ກໍຍ້ອນວ່າມັນແມ່ນເຄື່ອງປະດັບພວກຂອງພວກ ຜູ້ຍິງເທົ່ານັ້ນ.

ຢູ່ໃນພາກນີ້ ມີຄົນເປັນພັນຄົນອາສັຍຢູ່ໃນເຮືອນຊານຫລັງໃດກໍ ມີເຫດການເລັກໆນ້ອຍໆຕັ້ງພັນເຮືອງມາເລົ່າຊູ້ກັນຟັງ ບາງເຫດການ ກໍບໍ່ເປັນເຮືອງໜ້າສົນໃຈພໍເທົ່າໃດ ແຕ່ກໍເປັນໜ້າແປກປລາດ ຖ້າຜູ້ ໃດເຄີຍຢູ່ຫ້ອງເຮືອນເຫລົ່ານີ້ແລ້ວ ບໍ່ຮູ້ສຶກວ່າຢູ່ບາງຫ້ອງນັ້ນ ຕົນໄດ້ຢູ່ ກັບຜູ້ອື່ນອີກ ທັງໆທີ່ບໍ່ເຫັນເປັນຕົນເປັນຕົວ ເພາະວິນຍານຂອງຜູ້ທີ່ ເຄີຍໄດ້ອາສັຍຢູ່ໃນຫ້ອງເຫລົ່ານີ້ ວົນວຽນຢູ່ບ່ອນເກົ່າ ເຖິງວ່າຂະ ເຈົ້າໄດ້ລົ້ມຫາຍຕາຍຈາກໄປໄດ້ຫລາຍປີມາແລ້ວກໍຕາມ.

ແລງມື້ນຶ່ງ ມີຊາຍໜຸ່ມຄົນນຶ່ງ ຂີ່ໆລົ່ງໆໄປຍັບກະດິ່ງຢູ່ເຮືອນ ເຫລົ່ານີ້ ທ້າຍສຸດລາວກໍມາຮອດເຮືອນຫລັງທີ່ສິບສອງ ລາວເອົາຖົງທີ່ ລາວແບກຢູ່ບ່າປ່ອງລົ່ງ ແລ້ວກໍລຸບຂີ້ຝຸ່ນອອກຈາກໃບໜ້າ ຈົນເປັນ ທີ ຮຽບຮ້ອຍແລ້ວ ລາວຈຶ່ງເອົາມືຍັບກະດິ່ງ ສຽງກະດິ່ງທີ່ສະທ້ອນກັບ ເຂົ້າຫູລາວ ປ່າກົດວ່າໄດ້ຍິນມາແຕ່ໄກໆພູ້ນ ຄ້າຍກັບວ່າມັນດັງມາ ຈາກພື້ນດິນບ່ອນເລິກໆ.

ເຈົ້າຂອງເຮືອນຜູ້ຍິງຍ່າງມາໄຂປະຕູ ຊາຍໜຸ່ມເບິ່ງລາວແລ້ວ ຄິດວ່າລາວຄືກັນກັບສິ່ງຂອງສິ່ງນຶ່ງ ທັງອ້ວນ ທັງໃຫຍ່ ບໍ່ມີສັນວັນມະ

ແລະບໍ່ມີແຂ້ວມີຂາ ຈຶ່ງລອຍຂຶ້ນມາຈາກຂຸມດ້ວຍຄວາມຫວດຫີວ ເພື່ອ. ຫວັ່ງວ່າຈະໄດ້ກິນສິ່ງໃດສິ່ງນຶ່ງຫລືຜູ້ໃດຜູ້ນຶ່ງ.

ຊາຍໜຸ່ມຜູ້ນັ້ນຖາມວ່າ ລາວມີຫ້ອງເຊົ່າສຳລັບນີ້ແລ້ງນີ້ບໍ?.

"ເຊີນເຂົ້າມາ" ຜູ້ຍິງເວົ້າ ສຽງຂອງລາວຄ່ອຍໆ ແຕ່ຈະ. ດ້ວຍເຫດໃດນໍ້ຮູ້ ປາກົດວ່າຊາຍໜຸ່ມບໍ່ນັກສຽງຂອງລາວເລີຍ "ຂ້ອຍ ມີຫ້ອງເປົ່າຢູ່ຫ້ອງນຶ່ງຢູ່ດ້ານຫລັງຂອງຊັ້ນທີສາມເຈົ້າຢາກໄປເບິ່ງບໍ?"

ຊາຍໜຸ່ມຍ່າງຕາມລາວຂຶ້ນເມື່ອ ຢູ່ຕາມລະບຽງມີແສງເຫັນພໍ ນິວໆ ຈັກແສງສ່ວາງນັ້ນສ່ອງມາຈາກໃສ ຊາຍໜຸ່ມກໍຮູ້ບໍ່ໄດ້ ຜ້າພົມປູ ພື້ນທັ່ງເກົ່າແລະຂາດ ຢູ່ລຽບຝາມີບ່ອນສຳລັບປູກດອກໄມ້ ຖ້າ ເປັນ ຈິງຕົ້ນໄມ້ທີ່ປູກຢູ່ນັ້ນກໍຕາມມາໄດ້ດົນນານແລ້ວ ເພາະອາກາດບໍ່ດີ ສ ອັບໆແນ່ບໍ່ມີຕົ້ນດອກໄມ້ໃດທີ່ຈະເກີດຢູ່ໄດ້ນານໃນບ່ອນແຄບນີ້.

"ແມ່ນຫ້ອງນີ້ແລ້ວ" ຜູ້ຍິງນັ້ນ ບອກໃນສຽງເຫລມເລີກຂອງ ລາວ "ຫ້ອງນີ້ດີສົມຄວນ ມີຄົນມາເຊົ່າບໍ່ໄດ້ຂາດ ຍາມຮ້ອນແລ້ງປີ ກາຍນີ້ ມີແຕ່ຄົນດີໆມາເຊົ່າຢູ່ ຂ້ອຍບໍ່ມີເຮື່ອງລາວຂັດສົນຫຍັງກັບຂະ ເຈົ້າ ຄ່າເຮືອນຂະເຈົ້າ ກໍຈ່າຍຢ່າງສມ່ຳສເມີ ນ້ຳຢູ່ທາງດ້ານສົ້ນສຸດ ພຸ້ນ ສະໂປຣມ ແລະມຸນເນ ມາເຊົ່າຢູ່ນີ້ຕັ້ງສາມເດືອນ ເຈົ້າຮູ້ຈັກຂະ ເຈົ້າບໍ? ຂະເຈົ້າເປັນຄົນຫລິ້ນລະຄອນ ເຕົ້າກາສຢູ່ທາງນີ້ເຈົ້າເຫັນບໍ່ ນັ້ນເປັນຫ້ອງກ້ວ້າງຂວ້າງດີ ມີບ່ອນພຽງພໍສຳລັບຫ້ອຍເຄື່ອງນຸ່ງເຈົ້າ ທຸກຄົນໄດ້ມາເຫັນແລ້ວກໍຕິດໃຈ ຖ້າເຈົ້າບໍ່ເອົາບໍ່ດົນກໍຈະມີຜູ້ອື່ນ ມາ ເຊົ່າ".

"ພວກຫລິ້ນລະຄອນມາເຊົ່າຢູ່ມີຫລາຍແທ້ບໍ?" ຊາຍໜຸ່ມຖາມ

"ຂະເຈົ້າຢູ່ບໍ່ໄດ້ດົນ ຂະເຈົ້າກໍໄປ ພວກທີ່ມາຢູ່ນີ້ ສ່ວນຫລາຍ

ແມ່ນພວກເຮັດວຽກຢູ່ໂຮງລະຄອນ ເພາະມັນແມ່ນຄົນທີ່ພວກຫລິ້ນລະຄອນຢູ່ກັນ ຢູ່ບ່ອນໃດຂະເຈົ້າກໍຢູ່ບໍ່ໄດ້ດົນດອກ ຂະເຈົ້າກັງວົນໄປອົງນມາຢູ່ເຮືອນແຖວໃກ້ໆນີ້ເອງ ຂະເຈົ້າມາແລ້ວບໍ່ດົນກໍໄປ".

ຊາຍໜຸ່ມຈ່າຍຄ່າເຮືອນສຳລັບອາທິດນຶ່ງ ລາວບອກວ່າລາວຈະເຊົ່າຢູ່ນີ້ ເພື່ອພັກຜ່ອນ ແລ້ວກໍນັບເງິນໃຫ້ຄ່າເຊົ່າ.

"ຢູ່ໃນຫ້ອງນີ້ ມີໝົດທຸກຢ່າງ ທີ່ເຈົ້າຕ້ອງການ" ເຈົ້າຂອງເຮືອນບອກ.

ກ່ອນລາວຈະຍ່າງອອກໄປ ຊາຍໜຸ່ມກໍເລີຍຕັ້ງຄຳຖາມຂຶ້ນ ມັນເປັນຄຳຖາມທີ່ລາວຖາມມາໄດ້ຫລາຍພັນເທື່ອແລ້ວ ຄຳຖາມອັນນີ້ຫ້ອຍຢູ່ຣິມສົບລາວທຸກເວລາ.

"ເຈົ້າຈື່ ຂອງຜູ້ຍິງສາວຄົນນຶ່ງບໍ? ລາວຊື່ ອີລຸຍ ວາສເນີ ລາວເຄີຍມາເຊົ່າຢູ່ເຮືອນນີ້ບໍ? ລາວອາດໄດ້ມາຮ້ອງເພັງຢູ່ໂຮງລະຄອນເຫລົ່ານີ້ ລາວເປັນຄົນພໍປານກາງ ບໍ່ຕ່ຳບໍ່ສູງ ເປັນຄົນຈອຍ ຜົມສີແດງ ແລະມີປານຢູ່ໃກ້ຕາກ້ຳຊ້າຍ".

"ບໍ່-ຂອຍຈື່ບໍ່ໄດ້ດອກ ພວກຄົນຫລິ້ນລະຄອນນີ້ ປ່ຽນຊື່ ຢູ່ເລື້ອຍໆ ແບບດຽວກັນກັບຂະເຈົ້າປ່ຽນທີ່ຢູ່ນີ້ແລ້ວ ຂະເຈົ້າມາແລ້ວກໍໄປ ເສັຍໃຈນຳ, ຂອຍບໍ່ຈື່ຊື່ນີ້ຊ້ຳນະ".

ຫ້າເດືອນມາແລ້ວ ທີ່ລາວຖາມຄຳຖາມແບບນີ້ ແຕ່ທຸກເທື່ອທີ່ຖາມກໍໄດ້ຮັບຄຳຕອບແຕ່ວ່າ "ບໍ່" ແລະ "ບໍ່".

ທຸກມື້ໃດ ລາວກໍທ່ຽວໄປຂອກຖາມນຳຜູ້ຄົນທີ່ຮູ້ຈັກກັບຄົນເຮັດວຽກເຮັດການຢູ່ນຳໂຮງລະຄອນນັ້ນ ວ່າມີຜູ້ຍິງຊື່ ອີລຸຍ ວາສເນີ ໄປຂອກຖາມເຮັດການນຳຂະເຈົ້າບ້ົນບໍ?

ແລະທຸກເລງໃດ ລາວກໍເຂົ້າໄປເບິ່ງໂຮງລະຄອນນັ້ນ ຈນກ ໂຮງລະຄອນນີ້ ທັ້ງໂຮງດີແລະບໍ່ດີ ບໍ່ໄດ້ເວັ້ນ ບາງໂຮງຈຸດໂຊມ ຫລາຍ ຈົນລາວຢ້ານວ່າຈະໄດ້ພົບເພື່ອນຍິງຂອງລາວຢູ່ນັ້ນ ແຕ່ລາວກໍ ໄປ--ໄປເພື່ອດ້ວຍຄວາມຫວັງ.

ເພາະລາວຮັກຜູ້ຍິງຄົນນັ້ນ ສຸດຫົວ ສຸດໃຈ ດັ່ງນັ້ນລາວຈຶ່ງມີ ຄວາມພະຍາຍາມ ທີ່ຈະຊອກໃຫ້ພົບ ຜູ້ຍິງຄົນນັ້ນ ໄດ້ເຫັນຈາກບ້ານ ຢ່າງກະທັນຫັນ ແລະລາວເຊື່ອວ່າຜູ້ຍິງຄົນນັ້ນຍັງຢູ່ໃນເມືອງໃຫຍ່ແຫ່ງ ນີ້ ແຕ່ທຸກສິ່ງທຸກຢ່າງຢູ່ໃນເມືອງນີ້ເຄື່ອນໄຫວບໍ່ໄດ້ຊາດຣະຍະ ຖ້າ ເຫັນວ່ານີ້ຫຍັງຢູ່ຊັ້ນເທິງພູ້ນໃນມືນີ້ ຕົ້ນຂົ້ນມານີ້ໜ້າ ກໍຈະເຫັນວ່ານັ້ນ ຍ້າຍໄປຢູ່ລຸ່ມພູ້ນແລ້ວ.

ຫອງເຊົ່າທີ່ນີ້ເຄື່ອງເຮືອນຄົບນີ້ ຊິງໃຫ້ຄວາມອົບອຸ່ນເຫ່ຊາຍ ພູ້ນວ່າດໃດວ່າດນີ້ງ ຫລືນັ້ນໃຫ້ຄວາມອົບອຸ່ນ ແກ່ລາວຢ່າງແທ້ຈິງກໍ່ວ່າ ໄດ້ ປາກົດວ່ານັ້ນໃຫ້ຄວາມໝັ້ນສັນຍາເຫລາວ່ວ່າ ຢູ່ນີ້ລາວຈະໄດ້ພັກ ຜ່ອນຢ່າງສົງບສຸກ.

ຢູ່ໃນຫ້ອງນີ້ມີຕຽງນ້ອຍນີ້ງ ມີຕັ່ງອີ້ສອງນ້ອຍ ຫຸ້ມດ້ວຍຜ້າທັ້ງ ເກົ່າແລະຂາດແດ່ແລ້ວ ຢູ່ຣະຫ່ວ່າງປ່ອງຢ້ຽມສອງປ່ອງ ມີກະຈົກອັນ ນີ້ງກ້ວ່າງປະມານສິບສອງນີ້ວ ຕາມຝ່າຫ້ອງກໍ່ມີຮູບເຂ່ອນຢູ່.

ຊາຍໜຸ່ມນັ່ງລົງເທິງຕັ່ງອີ້ນ້ອຍນີ້ງ ລາວມີຄວາມຮູ້ສຶກວ່າ ຫ້ອງ ນີ້ພະຍາຍາມຢາກເລົ່າເຣື່ອງຂອງມັນໃຫ້ລາວຟັງ ເຕັມທີ ຄວາມເວົ້າທີ່ ມັນວ່ານັ້ນແປກ ເຂົ້າໃຈໄດ້ຍາກ ປຽບເໝືອນວ່າແມ່ນຄວາມເວົ້າທີ່ ເລື່ອນລອຍມາແຕ່ປະເທດໄກໆພູ້ນ.

ພື້ນເຮືອນເປັນກະດ່ວງກະດາດ້ວຍສີສັນອັນນະ ແປກໆຫລາຍ

ສີ ປຽບຄືກັນກັບ ເກາະດອນດອກໄມ້ຫລາຍສອດຫລາຍສີຢູ່ກາງທ້ອງ ຂ້ ຝູ່ນກໍ້ຫຼ້ມທ່ີ່ຢູ່ທ່ອທຸກ່ບ່ອນ.

ຝ້າທ້ອງຕິດດ້ວຍເຈ້ຍສີສົດໃສ ຢູ່ດ້ານນຶ່ງກໍ່ມີເຕົ້າໄຟ ຢູ່ຝ້າ ດ້ານເທິງຂອງ ເຕົ້າໄຟມີ້ຜ້າແພ້ທ້ອຍ່ອນລົງມາ ເພ່ືອເຮັດໃ້ທ້ອງມີ ສ່ງ່າຣາສີ້ຂ້ຶ້ນອີກກໍ່ວ່າໄດ້ ແຕ່ຊ່າຍຫຼ້ມກໍ່ບ່ເ້ຫັ ນ່ວ່ານ້ັ ນຈະພ່າໃ້ ທ້ອງ ງ່ານ ຂ້ຶ້ນແ່ຢ່າ ງໃດເລ ຍ ແລະ ຮ ບ ທ່ີ ແ ວ ນ ຢ ຕ ນ ຝ ນ ນ ກ ເ ນ ຮ ບ ທ່ີ ຊ ຍ ຫຼ ມ ໄ ເ ຫ ນ ລ ວ ຫ ຍ ຮ ເ ທ ຢ ຕ ນ ທ ງ ເ ຳ ທ ລ ວ ເ ຍ ໄ ຢ ມ ໆ .

ເ ຶ ງ ເ ັ ໆ ນ ຍ ໆ ທ ຢ ຢ ຕ ນ ຈ ກ ນ ເ ນ ເ ນ ເ ຶ ງ ຂ ງ ພ ກ ຜ ຄ ນ ທ ໄ ນ ຢ ກ ນ ແ ລ ລ ມ ປ ໄ ນ ນ ມ ຮ ບ ຂ ງ ພ ກ ຫ ລ ລ ະ ຄ ນ ແ ມ ມ ຂ ງ ໃ ສ ດ ກ ໄ ມ ແ ມ ຕ ບ ມ ໃ ດ ເ ນ ຂ ງ ມ ຄ ຣ ຄ ເ ລ ຍ .

ຕ ນ ເ ບ ງ ເ ຶ ງ ແ ລ ະ ນ ນ ກ ສ ແ ງ ໃ ຊ ຍ ຫຼ ມ ເ ນ ເ ນ ຮ ບ ເ ນ ຮ ຍ ຂ ນ ນ ກ ງ ກ ບ ຜ ຄ ນ ທ ເ ຄ ຍ ໄ ນ ນ ກ ເ ຳ ຢ ທ ງ ທ ລ ວ ກ ຳ ລ ງ ຢ ດ ງ ອ ນ ້ .

ຮ ຍ ເ ຳ ແ ປ ງ ພ ຍ ຢ ຫ ກ ະ ຈ ກ ບ ອ ກ ໃ ຫ ລ ວ ຮ ວ ່ າ ມ ຜ ຍ ງ ໄ ມ ນ ຢ ໃ ນ ທ ງ ນ ້ ແ ມ ກ ອ ມ ຮ ຍ ມ ້ ອ ມ ນ ້ ຍ ໆ ຕ ນ ຝ ທ ງ ບ ອ ກ ໃ ຫ ຮ ວ ່ າ ມ ເ ດ ກ ນ ຍ ທ ຍ ງ ງ ມ ໆ ທ ວ ໆ ໄ ປ ຕ ນ ຝ ເ ພ ຂ ອ ກ ທ ບ ອ ນ ມ ແ ສ ງ ແ ດ ດ ແ ລ ະ ລ ມ .

ຮ ຍ ເ ປ ້ ະ ເ ປ ື ອ ນ ອ ງ ໃ ຫ ຍ ຢ ຂ ງ ຝ ພ ໃ ຫ ລ ວ ຄ ດ ວ ່ າ ຕ ງ ມ ຄ ນ ໃ ດ ຄ ນ ນ ຶ ງ ໃ ຈ ຮ ້ ຍ ແ ລ ວ ຄ ອ ງ ຫ ຍ ງ ໄ ປ ຕ ດ ຝ ນ ນ ້ .

ຢ ກ ງ ກ ນ ຂ ້ ນ ກ ບ ກ ະ ຈ ກ ມ ໃ ຜ ຄ ນ ນ ຶ ງ ໄ ດ ຂ ຽ ນ ຊ ໄ ວ ້ ວ ່ າ "ເ ຣ ິ "

ตามความຮູ້ສຶກຂອງລາວ ປາກົດວ່າພວກທີ່ເຄີຍໄດ້ຢູ່ຫ້ອງຄົນ
ເຄື່ອງນີ້ ຊຸດກ່ອນໆ ມີຄວາມໂຫດຮ້າຍທາຣຸນເມ່ຫ້ອງນີ້ຫລາຍ ປາກົດ
ວ່າ ເຂົ້າເຈົ້າເຮັດທຸກສິ່ງທຸກຢ່າງໃຫ້ຫ້ອງນີ້ເພື່ອຜ່ອນອາຣົມເສັຍຂອງ
ເຂົ້າເຈົ້າ ຄວາມຮ້າຍຂອງເຂົ້າເຈົ້າ ອາດເກີດຂຶ້ນ ມາຈາກສີແຈດ
ຕາຂອງສີຫ້ອງແລະຄວາມເຢັນຊາເປົ່າປ່ຽວຂອງມັນ ເພາະວ່າຕາມ
ຄວາມຮູ້ສຶກຂອງລາວ ມັນບໍ່ໃຫ້ຄວາມອົບອຸ່ນ ພໍຈະໃຫ້ຢູ່ນີ້ບໍ່ໄດ້ດົນ.

ຢູ່ຕາມຝາແລະຕັ່ງອີ້ ກໍມີຮອຍສັປຮອຍຄວັດ ຕຽງນອນກໍຊຸດ
ໂຊມເກືອບຈະໃຊ້ການບໍ່ໄດ້ ບັດຄົນຍ່າງ ພື້ນເຮືອນກໍຄັງອອດແອດ
ປານວ່າມັນເຈັບປວດເອົາແທ້ເອົາວ່າ.

ພວກຄົນທີ່ໄດ້ມາຢູ່ນີ້ເອີ້ນຫ້ອງນີ້ວ່າ "ເຮືອນ" ແຕ່ເຂົ້າເຈົ້າ
ເວັ້ນທີ່ຈະທຳລາຍມັນ ອາດເປັນວ່າເຂົ້າເຈົ້າຮັກຢາກມີເຮືອນຫລາຍ
ເລີຍພາໃຫ້ເຂົ້າເຈົ້າເກີດໃຈຮ້າມ ໃຫ້ກັບຫ້ອງນີ້ ຫລືບາງທີ ພວກທີ່
ເຄີຍໄດ້ຢູ່ຫ້ອງນີ້ ບໍ່ຮູ້ກັບຄຳວ່າ "ເຮືອນ" ຢ່າງແທ້ຈິງ ແຕ່ເຂົ້າ
ເຈົ້າຮູ້ດີວ່າ ຫ້ອງນີ້ບໍ່ແມ່ນເຮືອນອັນແທ້ຈິງ ດັ່ງນັ້ນ ເຂົ້າເຈົ້າຈຶ່ງ
ເກີດມີຄວາມໂມໂຫໂທໂສກັບມັນ.

ຊາຍໜຸ່ມນັ່ງປ່ອຍຄວາມຄິດເທື່ອລະຢ່າງລະເມ ຜ່ານສມອງ
ໄປຢ່າງຊ້າໆ ໃນຂນະດຽວກັນ ລາວກໍໄດ້ຍິນສຽງ ແລະໄດ້ກິ່ນຈາກ
ຫ້ອງອື່ນເຂົ້າມາກົ່ວກຸ່ນຢູ່ໃນຫ້ອງຂອງລາວ ລາວໄດ້ຍິນສຽງຫົວຈາກ
ບ່ອນໃດ່ບ່ອນນຶ່ງ ມັນບໍ່ແມ່ນສຽງຫົວດີໃຈ ຫລືພໍໃຈ ແຕ່ຢ່າງໃດເລີຍ
ຈາກຫ້ອງອື່ນໆ ລາວໄດ້ຍິນຜູ້ຍິງເວົ້າກັນດັ່ງດັ່ງ ແລະໄດ້ຍິນເຂົ້າເຈົ້າ
ຫລິ້ນການພະນັນກັນ ອີກສຽງນຶ່ງ ກໍແມ່ນສຽງຜູ້ຍິງຮ້ອງເພັງກ່ອນລຸກ
ນ້ອຍ ແລະສຽງນຶ່ງອີກທີ່ລາວໄດ້ຍິນແມ່ນສຽງສະອື້ນໄຫ້ ຢ່າງເສັຍອົກ

ເສັຍໃຈ ຈາກຫ້ອງຊັ້ນເທິງ ລາວໄດ້ຍິນສຽງຕີນຕຣີ ສຽງໄຂ ແລະ ອັດປະຕູດັງສນັ່ນ ຢູ່ຂ້າງນອກກໍ່ແມ່ນສຽງຝົດຂອງຣົຖໄຟ ແລ່ນຜ່ານໄປ ມາ ແລະສຽງຮ້ອງຂອງສັດທີ່ອອກຫາກິນຍາມກາງຄືນ.

ຕໍ່ມາ ຊາຍໜຸ່ມກໍ່ມີຄວາມຮູ້ສຶກຄ້າຍກັບວ່າ ຫ້ອງນີ້ກຳລັງຫັນໃຈ ກາມຫັນໃຈຂອງມັນປາກົດວ່າອອມກຳລັງເຕັມທີ ປາມກັບກາມຫັນໃຈ ຂອງຄົນເຈັບທີ່ກຳລັງຊອມໃຈ.

ໃນຣະຍະເວລາທີ່ລາວຕົກຢູ່ກັບຄວາມລະເມີເພີ້ຝັນຢູ່ນັ້ນ ທັນທີ ທັນໃດ ລາວກໍ່ໄດ້ກິ່ນຫອມນ້ຳອົບ ເຮັດດ້ວຍດອກໄມ້ຊະນິດນຶ່ງ ເອີ້ນວ່າ ມີຢອມເໝດ ຟຸ້ງເຂົ້າມາໃນຫ້ອງ ກິ່ນຫອມຂອງມັນ ຫອມແຮງພໍ່ລົກ ປາມວ່າເຈົ້າຂອງຄົນ ທານ້ຳອົບຊະນິດນີ້ ໄດ້ເຂົ້າມາປາກົດຕົວຢູ່ໃນ ຫ້ອງ ດັ່ງນັ້ນ ຊາຍໜຸ່ມຈຶ່ງລະເມີເພີ້ຝັນ ຖາມອອກໄປປາມມີຄົນລົມກັບ ລາວວ່າ "ແມ່ນຫຍັງເກາະ ທີ່ຮັກ?".

ບຶດນຶ່ງຕໍ່ມາ ລາວກໍ່ຟ້າວໂດດລຸກຂຶ້ນຈາກບ່ອນນັ່ງ ແລ້ວຫລຽວ ເບິ່ງອອມຂ້າງຂອງລາວ ຄ້າຍກັບວ່າ ລາວຊອກຫາຜູ້ໃດຜູ້ນຶ່ງ ເພາະ ກິ່ນຫອມນັ້ນ ຫອມຢູ່ໃກ້ໆກັບລາວ ແລະອອມຕິດຕົວລາວຢູ່ ຈົນພາໃຫ້ ລາວຫລົງເດ່ເຊມອອກໄປ ໃນທ່າທີ່ຮັບຕ້ອນຜູ້ໃດ ຜູ້ນຶ່ງ ຊົ່ວຂນະນຶ່ງ ລາວລືມຕົວໄປໂດຍບໍ່ຮູ້ສຶກວ່າຕົນຢູ່ໃສ ແລະກຳລັງເຮັດຫຍັງ.

ກໍເປັນຕາງຶດງ່ວ່າ ເຮັດເມ ວ່ໃດກິ່ນຫອມຈຶ່ງພາໃຫ້ລາວລະເມີ ໄດ້ເຖິງພຽງນີ້ ລາວຕ້ອງໄດ້ຍິນສຽງໃດສຽງນຶ່ງ ແຕ່ສຽງນັ້ນຈະເຮັດ ໃຫ້ລາວເພີ້ຝັນໄປໄດ້ຊັ້ນນະ?.

"ລາວຕ້ອງຢູ່ໃນຫ້ອງນີ້" ຊາຍໜຸ່ມລະເມີເວ້າອອກມາຜູ້ດຽວ ແລ້ວລາວເລີ່ມຕົນຊອກຫາສິ່ງຂອງພໍ່ທີ່ຈະເປັນຂອງຢັ້ງຢືນວ່າ ຜູ້ສາວ

ຂອງ ລາວເຄີຍມາຢູ່ນີ້ ລາວຮູ້ວ່າ ຖ້າຫາກລາວເຫັນສິ່ງໃດສິ່ງນຶ່ງຫລົງ ເຫລືອຢູ່ໃນຫ້ອງນີ້ ເປັນເຄື່ອງທີ່ຜູ້ສາວລາວເຄີຍໃຊ້ ຫລືໄດ້ຈັບຍາຍ ລາວຈະຕ້ອງຮູ້ຈັກໂລດ ກິ່ນຫອມດອກໄມ້ຊະນິດນີ້ ວົນວຽນຢູ່ອ້ອມຕົວ ຂອງລາວ ແລະນັ້ນເປັນກິ່ນດອກໄມ້ຊະນິດທີ່ຜູ້ສາວລາວມັກທີ່ສຸດ ລາວ ສົງໃສ່ວ່າກິ່ນນັ້ນມັນມາຈາກໃສ?.

ຫ້ອງນີ້ກໍ່ບໍ່ໄດ້ມີຮູບສະອາດພໍເທົ່າໃດ ມີເຄື່ອງເລັກໆ ນ້ອຍໆ ຂອງຜູ້ຍິງເຫລືອຢູ່ໃນຫ້ອງເດັຍຣະດາດ ບາງອັນກໍ່ເໝ່ນຂອງສຳລັບນັດ ພົບ ບາງອັນກໍ່ເໝ່ນຂອງປະດັບພົມ ໃຫ້ມັນງາມຂຶ້ນກ່ວາເກົ່າ ຜ້າອີກ ຕ່ອນນຶ່ງ ກໍ່ມີກິ່ນຫອມເໝ່ວດອກໄມ້ຊະນິດອື່ນ ນອກນັ້ນກໍ່ເໝ່ນປົ້ນ ບໍ່ມີ ສິ່ງໃດທີ່ວ່າເປັນຂອງຜູ້ສາວລາວເລີຍ.

ລາວຍ່າງອ້ອມຫ້ອງປານພາຊອກຫາສັດຮ້າຍ ລາວຊອກໄປທຸກ ຈອກທຸກແຈ ທັງຄູ້ເຂົ້າລົງຊອກທົ່ວໄປຕາມພື້ນຫ້ອງ ແຕ່ກໍ່ບໍ່ເຫັນສິ່ງ ຂອງໃດທີ່ມີກິ່ນຫອມຂອງດອກໄມ້ຊະນິດຜູ້ສາວຂອງລາວນັກ.

ລາວຢາກເຫັນຕົວເໜດຂອງກິ່ນຫອມດອກໄມ້ຊະນິດນີ້ ດ້ວຍຕາ ເປົ່າຂອງລາວແທ້ໆ ລາວບໍ່ນຶກບໍ່ຝັນເລີຍວ່າ ຜູ້ສາວຂອງລາວຢູ່ອ້ອມ ຕົນຕົວຂອງລາວ ເລະກຳລັງຮ້ອງຫາລາວ.

ໜ້ອຍນຶ່ງຕໍ່ມາ ລາວຊຳ້ພັດໄດ້ຍິນສຽງແວວໆ ຮ້ອງລາວອີກ ລາວກໍ່ເລີຍຖາມສວນອອກໄປຢ່າງດັງໆວ່າ "ແມ່ນຫຍັງ? ທີ່ຮັກ!" ລາວຫັງປົ້ນອ້ອມຊອກເບິ່ງທົ່ວຫ້ອງດ້ວຍແສງຕາອັນແຂງກະດ້າງ ໂດຍ ບໍ່ເຫັນຫຍັງຜິດ ຄັ້ນວ່າຈະມີເງົາສີລາງໆເປັນຮູບແຂ້ງຮູບຂາ ແລະ ແຂນເດ່ອອກມາຕ້ອນຮັບ ດ້ວຍຄວາມຮັກກໍ່ບໍ່ເຫັນ ນອກຈາກກິ່ນຫອມ ດອກໄມ້ຂາວ ຫອມຟຸ້ງອ້ອມຕົນຕົວ ຂອງລາວທັ້ນ ໂອຍ! ເຈົ້າ

ເຮືອນເອີຍ! ກິ່ນຫອມດອກໄມ້ນີ້ມາແຕ່ໃສເດ? ລາວສົງໃສ່ວ່າກິ່ນຫອມດອກໄມ້ນີ້ມາແຕ່ໃສເດ? ລາວສົງໃສ່ວ່າ ກິ່ນຫອມດອກໄມ້ ຊຶ່ງຈັ່ງໃດຈຶ່ງຈະເອີ້ນເປັນສຽງອອກມາໄດ້? ດັ່ງນັ້ນລາວຈຶ່ງບໍ່ພິດຄວາມພຍາຍາມຊອກຕໍ່ໄປ.

ລາວຊອກເຫັນສິ່ງເລັກໆນ້ອຍຫລາຍອັນຫລາຍເນື່ອທີ່ປະຖິ້ມໄວ້ໃນຫ້ອງນີ້ ຈາກຜູ້ຄົນທີ່ເຄີຍມາຢູ່ນີ້ກ່ອນລາວ ແຕ່ລາວສົງໄສ່ວ່າຜູ້ສາວຂອງລາວ ກໍອາດເຄີຍໄດ້ມາຢູ່ນີ້ ເພາະລາວຮູ້ສຶກວ່າ ວິນຍານ ຂອງຜູ້ສາວລາວໄດ້ມາວົນວຽນຢູ່ນີ້ ພຽງແຕ່ລາວບໍ່ເຫັນຫຍັງເປັນພິຮຸດເທົ່ານັ້ນ.

ໃນທັນໃດນັ້ນ ລາວກໍຄິດເຖິງເຈົ້າຂອງເຮືອນຂຶ້ນມາ

ລາວຟ້າວແລ່ນອອກຈາກຫ້ອງລົງໄປຫາ ເຈົ້າຂອງເຮືອນ ກິ່ນຫອມນັ້ນກໍຕິດຕາມລາວອອກໄປນຳ.

ລາວບຶບກະດິ່ງຢູ່ໜ້າຫ້ອງ ນ້ອຍນຶ່ງ ເຈົ້າຂອງເຮືອນກໍອອກມາຫາລາວ.

ລາວພຍາຍາມຂົ່ມສະຕິບໍ່ໃຫ້ຕື່ນເຕັ້ນ ແລະຖາມຢ່າງສຽງທັມມະດາວ່າ "ກະຮຸນາບອກໃຫ້ຂອຍຮູ້ແດ່ວ່າ ແມ່ນໃຜໄດ້ມາຢູ່ຫ້ອງນີ້ກ່ອນຂອຍ?"

"ໄດ້ - ຂອຍບອກເຈົ້າອີກເທື່ອນຶ່ງກໍໄດ້ສິເປັນຫຍັງ...

ກ່ອນເຈົ້າມາຢູ່ກໍແມ່ນ ທ້າວສະໂປຣມ ແລະມູນເມ ກໍຄືຂອຍໄດ້ເວົ້າໃຫ້ເຈົ້າຟັງນັ້ນແລ້ວ ນັ້ນແມ່ນຜົວເມັຍມູນເມອີ່ຫລີ ໄດ້ມາຢູ່ນີ້ແຕ່ຜູ້ເມັຍນັ້ນໃສ່ຊື່ລາວເອງ ດັ່ງພວກລະຄອນທົ່ວໄປ".

"ກະຮຸນາເວົ້າໃຫ້ຂອຍຟັງແດ່ວ່າມາດາມມູນເມ ນັ້ນລາວເປັນ

ຄົນຢ່າງໃດ?".

"ລາວເປັນຄົນຕ່ຳ ແລະອ້ວນ ຜິວດຳ ຂະເຈົ້າອອກໜີຈາກໜີ້ ໄປອາທິດນຶ່ງແລ້ວ".

"ກ່ອນພວກສອງຜົວເມັຍນີ້ເດ?".

"ແມ່ນສຸພາບບຸຣຸດຄົນນຶ່ງ ລາວບໍ່ແມ່ນພວກລະຄອນ ລາວຮອດ ບໍ່ຈ່າຍຄ່າຫ້ອງຊ້ຳ ກ່ອນຜູ້ຊາຍຄົນນີ້ແມ່ນມາດາມຄຣາວເດີ ແລະລູກ ສາວສອງຄົນ ຂະເຈົ້າຢູ່ນີ້ຮອດສີ່ເດືອນ ກ່ອນແມ່ລູກພວກນີ້ແມ່ນ ຊາຍ ເຖົ້າຄົນນຶ່ງຊື່ຖຸລ ລູກຊາຍລາວເປັນຄົນເສັຍຄ່າເຮືອນໃຫ້ ລາວເຊົ່າຢູ່ ນີ້ຫົກເດືອນ ຕ່ຳກວ່ານີ້ຂອຍກໍ່ບໍ່ໄດ້".

ລາວຂອຍໃຈເຈົ້າຂອງເຮືອນແລ້ວລາວກ່ຍ່າງກັບຂຶ້ນເມືອຫ້ອງ ລາວຊ້າໆ.
